ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ: 002 /ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ 21 MAY 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສະໄໝວິສາມັນ ຄັ້ງທີ 1 ປະຈຳປີ 2020, ລົງວັນທີ 23/04/2020.
- ອີງຕາມມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2020, ລົງວັນທີ 21/05/2020.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (" ວຈຊຕ ") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ 29 ພຶດສະພາ 2020 ເວລາ 14:30 ໂມງ (ເລີ່ມລົງທະບຽນເວລາ 13:00-14:30 ໂມງ) ທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດຍັງໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມຜ່ານລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la). ລວມທັງໄດ້ກຳນົດວັນທີ 30 ເມສາ 2020 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019, ເຊິ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຈະສະຫຼະເວລາອັນມີຄ່າຂອງທ່ານ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Wei Hua

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2019;
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019 ຂອງ ວຈຊຕ;
3. ບົດລາຍງານການເງິນປະຈຳປີ 2019 ຂອງ ວຈຊຕ;
4. ບົດລາຍງານການດຳເນີນທຸລະກິດປະຈຳປີ 2019 ແລະ ແຜນການດຳເນີນທຸລະກິດ 2020 ຂອງ ວຈຊຕ;
5. ຊີວະປະຫວັດຫຍໍ້ຂອງຜູ້ທີ່ຈະຄັດເລືອກເປັນສະມາຊິກສະພາບໍລິຫານສະໄໝທີ 2;
6. ຊີວະປະຫວັດຂອງສະມາຊິກອິດສະຫຼະສະໄໝທີ 1 ເພື່ອການມອບສິດຂອງຜູ້ຖືຮຸ້ນ;
7. ໃບມອບສິດ;
8. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2019;
9. ແຜນທີ່ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2019;

<u>ໝາຍເຫດ:</u>

1. ຜູ້ຖືຮຸ້ນທຸກທ່ານສາມາດຮັບເອົາໜັງສືເຊີນປະຊຸມ ແລະ ເອກະສານທີ່ກ່ຽວຂ້ອງໄດ້ໃນວັນທີ 22 ພຶດສະພາ 2020 ທີ່ ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ເບີໂທລະສັບ:（856-21）454361-4, ແຟັກ:（856-21）454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມງານດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ເພື່ອຢັ້ງຢືນການລົງທະບຽນເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດຕາມ **<u>ເອກະສານຄັດຕິດ 7</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມ ກະລຸນາສະແດງເອກະສານ ຫຼື ຫຼັກຖານ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 8</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ຜູ້ຮັບຜິດຊອບທີ່ຖືກແຕ່ງຕັ້ງໂດຍປະທານສະພາບໍລິຫານ ແລ້ວຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີຜູ້ຖືຮຸ້ນມອບສິດໃຫ້ສະມາຊິກອິດສະຫຼະຂອງ ວຈຊຕ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ ☑ ເພື່ອເລືອກເອົາສະມາຊິກອິດສະຫຼະຂອງ ບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບທີ່ ຫ້ອງການບໍລິສັດ ວຽງຈັນ ເຊັນເຕີ ລາວ ມະຫາຊົນ, ຊັ້ນ 5 ອາຄານຫ້ອງການວຽງຈັນເຊັນເຕີ, ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 28 ພຶດສະພາ 2020.
6. ໃນກໍລະນີທີ່ທ່ານມີຂໍ້ສົງໄສ ຫຼື ຕ້ອງການຊອບຖາມລາຍລະອຽດເພີ່ມເຕີມ, ສາມາດຕິດຕໍ່ສອບຖາມ ທ. ຄຳຮຸ່ງ

(Mr. Lei Yaohai) ໂທ: 020 95549597 (ອີເມວ: yhlei@vclao.com) ຫຼື ນ. Lily ໂທ: 020 52545640 ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 ເພື່ອໃຫ້ຜູ້ຖືຮຸ້ນ ຮັບຊາບເຖິງຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມ ດັ່ງລຸ່ມນີ້:

1. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງວາລະຄືດັ່ງລຸ່ມນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງແຜນການບໍ່ແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;

ວາລະທີ 2: ພິຈາລະນາ ແລະ ຮັບຮອງແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ;

ວາລະທີ 3: ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນບາງສ່ວນ;

ວາລະທີ 4: ພິຈາລະນາ ແລະ ຮັບຮອງການສືບຕໍ່ໃຫ້ບໍລິສັດ ເອີນແອນຢັ ລາວ ຈາກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ;

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ແລະ ລາຕຳແໜ່ງສະພາບໍລິຫານອິດສະຫຼະ;

ວາລະທີ 6: ພິຈາລະນາ ແລະ ຮັບຮອງການປັບປຸງໂຄງຮ່າງຄະນະກຳມະການສະພາບໍລິຫານຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017;

ວາລະທີ 7: ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1 ປະຈຳປີ 2019.

2. ກ່ຽວກັບວາລະທີ 1,2,4,5 ແລະ 6 ແມ່ນສຳເລັດແລ້ວຕາມການເຫັນດີຂອງປະຊຸມແລ້ວ.

3. ສ່ວນວາລະທີ 3 ແມ່ນກຳລັງດຳເນີນການຢູ່ ເນື່ອງຈາກວ່າຊັບສິນທີ່ມີເຈດຈຳນົງໃນການຮັບຊື້ນັ້ນ ແມ່ນເປັນລາຍການທີ່ກ່ຽວພັນ, ຕາມກົດລະບຽບທີ່ກ່ຽວຂ້ອງຂອງກຳມະການການຄຸ້ມຄອງຫຼັກຊັບ ຕ້ອງມີການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ສະນັ້ນ ການຈັດຕັ້ງປະຕິບັດມະຕິດັ່ງກ່າວ ຈະມີການສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດ ແລ້ວຈຶ່ງມີການຈັດຕັ້ງປະຕິບັດເປັນຈິງໄດ້.

ຄຳເຫັນຂອງສະພາບໍລິຫານ:

ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2019 ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019

ລາຍລະອຽດ:

ກອງປະຊຸມວິຊາສາມັນຜູ້ຖືຮຸ້ນບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນຄັ້ງທີ 1 ປະຈາປີ 2019 ເຊິ່ງໄດ້ຈັດຂຶ້ນໃນວັນທີ 29 ພະຈິກ 2019, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ໄດ້ເປີດເຜີຍບົດບັນທຶກກອງປະຊຸມດັ່ງກ່າວໃນເວັບໄຊ້ຂອງ ຕະຫຼາດຫຼັກຊັບລາວ ແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມວິຊາສາມັນຜູ້ຖືຮຸ້ນດັ່ງກ່າວ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດປະຈຳປີ 2019

ລາຍລະອຽດ:

ບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2019 ແມ່ນໄດ້ຮັບການກວດສອບຢ່າງຖືກຕ້ອງຈາກບໍລິສັດ ເອີນ ແອນ ຢັ ງ ລາວຈຳກັດ ມີລາຍລະອຽດໃນ **ເອກະສານຄັດຕິດ 3** ທີ່ໄດ້ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການຮັບຮອງຈາກສະພາບໍລິຫານແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2019.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ແຜນການດຳເນີນ ທຸລະກິດປີ 2020

ລາຍລະອຽດ:

1. ລາຍງານຜົນການດຳເນີນທຸລະກິດປະຈຳປີ 2019

ບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2019 ແມ່ນໄດ້ຮັບຮອງຈາກສະພາບໍລິຫານ ວຈຊຕ ເຊິ່ງມີລາຍລະອຽດໃນ **ເອກະສານຄັດຕິດ 4** ທີ່ໄດ້ຄັດຕິດມາພ້ອມນີ້, ຜົນການດຳເນີນທຸລະກິດດັ່ງກ່າວ ສາມາດສັງລວມໂດຍຫຍໍ້ຄືດັ່ງລຸ່ມນີ້:

1) ລາຍຮັບ

ໃນປີ 2019, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 12,649,812,728 ກີບ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 3,888,241,086.47 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 3,725,882,684.53 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 2,389,832,918 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຈັດງານ ແມ່ນເປັນເງິນ 1,623,211,046.48 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາ ແມ່ນເປັນເງິນ 1,022,644,992.48 ກີບ. ເຫດຜົນທີ່ລາຍຮັບຫຼຸດລົງຈາກແຜນຄາດຄະເນ ແມ່ນຍ້ອນມີການປັບປ່ຽນວິທີການຮັບຮູ້ລາຍໄດ້ຂອງບໍລິສັດ ຊຶ່ງລາຍລະອຽດແມ່ນໄດ້ລະບຸໄວ້ໃນເອກະສານລາຍງານການເງິນ 2019.

2) ລາຍຈ່າຍ

ໃນປີ **2019,** ລາຍຈ່າຍທັງໝົດຂອງ ວຈຊຕ ແມ່ນ 3.09 ຕື້ກີບ, ຄິດເປັນ 24.43 % ຂອງລາຍຮັບທັງໝົດ.

3) ການມອບພັນທະໃຫ້ລັດ

ໃນປີ 2019, ການມອບພັນທະອາກອນປະຈຳປີທັງໝົດຂອງບໍລິສັດແມ່ນເປັນເງິນ 2,768,340,813 ກີບ, ໃນນັ້ນ ອາກອນກຳໄລເປັນເງິນ 1,284,606,370 ກີບ, ອາກອນມູນຄ່າເພີ່ມເປັນເງິນ 1,469,330,443 ກີບ, ອາກອນເງິນເດືອນເປັນເງິນ 14,404,000 ກີບ.

4) ກຳໄລ

ໃນປີ 2019, ກຳໄລກ່ອນອາກອນທັງໝົດຂອງບໍລິສັດ ແມ່ນເປັນເງິນ 10,082,667,122 ກີບ, ມີການຫຼຸດລົງ 29.51% ຈາກປີທີ່ແລ້ວ. ກຳໄລສຸດທິແມ່ນເປັນເງິນ 7,733,881,659 ກີບ. ສາເຫັດໃນການຫຼຸດລົງ ແມ່ນຍ້ອນວ່າໄລຮັບຈາກການປ່ຽນແປງຂອງມູນຄ່າຍຸດຕິທຳແຫ່ງການລົງທຶນຂອງຂະແໜງອະສັງຫາລິມະຊັບ, ມູນຄ່າຍຸດຕິທຳຂອງປີ 2019 ແມ່ນປະມານ 500 (ຫ້າຮ້ອຍ) ລ້ານກີບ, ຂອງປີ 2018 ແມ່ນປະມານ 4.4 (ສີ່ຈຸດສີ່)ຕື້ກີບ.

2. ແຜນການດຳເນີນທຸລະກິດປີ 2020

1) ປະຕິບັດຕາມແຜນການນຳໃຊ້ທຶນທີ່ລະດົມໄດ້, ກະກຽມວຽກງານທີ່ກ່ຽວຂ້ອງສຳລັບການຮັບຊື້ຊັບສິນ, ຫຼັງຈາກໄດ້ມີການອະນຸມັດຕາມລະບຽບກົດໝາຍກ່ຽວຂ້ອງແລ້ວ ໃຫ້ປະຕິບັດຕາມມະຕິ;

2) ສໍາລັບວຽກງານສູນການຄ້າໃນປີ 2020, (1) ສືບຕໍ່ເພີ່ມທະວີການຊອກຫາ ດຶງດູດຍີ່ຫໍ້ສາກົນເຂົ້າມາຈໍາໜ່າຍຢູ່ສູນການຄ້າ, ເພີ່ມທະວີການຮ່ວມມືກັບບັນດາຍີ່ຫໍ້ດັ່ງຂອງທ້ອງຖິ່ນໃນລາວ, ສ້າງຊ່ອງທາງການຕິດຕໍ່ພົວພັນກັບບັນດາຍີ່ຫໍ້ທີ່ມີຊື່ສຽງຢູ່ຕ່າງປະເທດ; (2) ສຸມໃສ່ວຽກງານການໃຫ້ເຊົ່າພື້ນທີ່ຈັດງານ ແລະ ໂຄສະນາໃນດ້ານທຸລະກິດ ແລະ ກິດຈະກໍາວັດທະນະທໍາ ທີ່ເປັນຮູບແບບໃໝ່ທີ່ມີຫົວຄິດປະດິດສ້າງ ແລະ ມີອົດທິພົນຫລາຍຂຶ້ນ, ເພີ່ມທະວີການຮ່ວມມືກັບບັນດາວິສາຫະກິດທີ່ມີຊື່ສຽງໃນລາວ, ແລະ ສຸມໃສ່ທຸລະກິດຮູບແບບຕ່າງໆເຊັ່ນ: ການວາງສະແດງສິນຄ້າທີ່ມີຊື່ສຽງ; (3) ລິເລີ່ມເປີດການຊື້ຂາຍສິນຄ້າໂດຍຜ່ານຊ່ອງທາງການຄ້າອອນໄລນ໌ທາງເຟສບຸກ, ປີນີ້ຈະສືບຕໍ່ລົງເລິກການດໍາເນີນງານຂອງການຊື້ຂາຍສິນຄ້າອອນໄລນ໌, ປັບປຸງຜະລິດຕະພັນ ຍີ່ຫໍ້ໃນສູນການຄ້າອອນໄລນ໌, ແລະ ສ້າງຕັ້ງຮູບແບບທຸລະກິດທີ່ມີການສົມທົບອອນໄລນ໌ ແລະ ອອບໄລນ໌ ກໍຄືທຸລະກິດ 0 2 0.

3) ສໍາລັບວຽກງານອາຄານສໍານັກງານ, (1) ສືບຕໍ່ເພີ່ມທະວີການຊອກຫາ ດຶງດູດວິສາຫະກິດມາເຊົ່າພື້ນທີ່ຫ້ອງການ, ພະຍາຍາມໃຫ້ມີການເຊົ່າໂດຍບໍ່ມີຫ້ອງຫວ່າງລົງ; (2) ຊຸກຍູ້ການພັດທະນາໄປຄຽງຄູ່ກັນລະຫວ່າງສູນການຄ້າ ແລະ ອາຄານສໍານັກງານ ແລະ ພະຍາຍາມນໍາຜູ້ບໍລິໂພກທີ່ເປັນພະນັກງານເຮັດວຽກຢູ່ອາຄານສໍານັກງານ ໄປຈັບຈ່າຍໃຊ້ສອຍຢູ່ສູນການຄ້າ.

<u>ຄໍາເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດລາຍງານຜົນການດໍາເນີນທຸລະກິດປະຈໍາປີ 2019 ແລະ ແຜນການດໍາເນີນທຸລະກິດປີ 2020.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກໍານົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈໍາປີ 2019 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ

<u>ລາຍລະອຽດ:</u>

ອີງຕາມກົດລະບຽບຂອງບໍລິສັດ, ສໍາລັບການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ພາຍຫຼັງທີ່ໄດ້ຫັກກໍາໄລສຸດທິ ແລະ ກໍາໄລສະສົມເຂົ້າຄັງສໍາຮອງໄວ້ຕາມກົດໝາຍ ແລະ ຄັງອື່ນໆ (ຖ້າມີ) .

ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນປະຈໍາປີ 2019 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນຕາມມື້ປິດປຶ້ມບັນຊີໃນວັນທີ 30 ເມສາ 2020 ໃນອັດຕາ 13.14 ກີບຕໍ່ຮຸ້ນ, ລວມເປັນເງິນ

ປັນຜົນຈ່າຍທັງໝົດ 1,934,206,686 ກີບ. ໃຫ້ຈ່າຍເງິນປັນຜົນພາຍໃນ 30 ມື້ ຫຼັງຈາກໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນແລ້ວ ແລະ ມອບໃຫ້ຜູ້ອຳນວຍການໃຫຍ່ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າທຸລະກິດຂອງບໍລິສັດໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກການລະບາດຂອງພະຍາດໂຄວິດ-19ໃນຕົ້ນປີ 2020, ນະໂຍບາຍທີ່ໃຊ້ໃນປະຈຸບັນ ແລະ ອະນາຄົດທີ່ເປັນຊ່ວງໄລຍະໜຶ່ງ ແມ່ນການຈ່າຍເງິນປັນຜົນໜ້ອຍລົງ ແລະ ຮັກສາກະແສເງິນສົດ ເພື່ອສະກັດກັ້ນພະຍາດໂຄວິດ-19 ດ້ານຄວາມສ່ຽງຕໍ່ການດຳເນີນທຸລະກິດ ຮັກສາຄວາມໝັ້ນຄົງຂອງທຸລະກິດ ແລະ ໃຫ້ມີການພັດທະນາຢ່າງຕໍ່ເໜື່ອງ. ແຕ່ເພື່ອສ້າງຜົນຕອບແທນໃຫ້ບັນດາຜູ້ຖືຮຸ້ນທີ່ໝັ້ນໃຈຕໍ່ ວຈຊຕ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນໃນຕະຫຼາດຫຼັກຊັບ ຈະມີການສະເໜີຈ່າຍເງິນປັນຜົນປະຈຳປີ 2019 ໃນອັດຕາ 50% ຂອງຜົນກຳໄລສຸດທິເຄິ່ງປີ ໂດຍອີງຕາມລາຍຮັບໃນໄລຍະເວລາເຄິ່ງປີທີ່ໄດ້ມີການຈົດທະບຽນ. ແລະເຫັນດີສະເໜີກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດການຈ່າຍເງິນປັນຜົນດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງການຄັດເລືອກສະມາຊິກ ແລະ ປະທານສະພາບໍລິຫານສະໄໝທີ 2

<u>ລາຍລະອຽດ:</u>

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ອີງຕາມຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ມາດຕາ 13 ສະມາຊິກສະພາບໍລິຫານມີອາຍຸການ 2 ປີ ເທົ່າກັບໜຶ່ງສະໄໝ ນັບແຕ່ວັນທີໄດ້ຮັບການຮັບຮອງຈາກມະຕິກອງປະຊຸມຜູ້ຖືຮຸ້ນ. ຊຶ່ງມາຮອດປັດຈຸບັນ ເຫັນວ່າສະມາຊິກສະພາບໍລິຫານສະໄໝທີ 1 (ແຕ່ວັນທີ 30/11/2017 ເປັນຕົ້ນມາ) ໄດ້ໝົດອາຍຸການແລ້ວ ສະນັ້ນ ຈຶ່ງສະເໜີລາຍຊື່ເພື່ອຄັດເລືອກເປັນສະມາຊິກສະພາບໍລິຫານສະໄໝທີ 2 ດັ່ງລຸ່ມນີ້:

- ທ່ານ ນາງ ໂຈ ເຫຼີ (Ms. Zhou Lei) ປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ຮອງປະທານ

- ທ່ານ ເວີຍ ຫວາ (Mr. Wei Hua) ສະມາຊິກ
- ທ່ານ ບຸລະພາ ສັນຕິຄົງຄາ ສະມາຊິກ
- ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong) ສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ
- ທ່ານ ເຊີ່ອນ ເຟີ່ຍຫູ້ (Mr. Sun Feihu) ສະມາຊິກ
- ທ່ານ ສ່ຽວ ໂຢ໋ງ (Mr. Xiao Yong) ສະມາຊິກອິດສະລະ
- ທ່ານ ນາງ ເຕີ້ງ ຢູ່ (Ms. Deng Yu) ສະມາຊິກອິດສະລະ
- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະລະ
- ທ່ານ ຈໍຊິ່ງ ບົວສີເນ່ັ່ງມາ ສະມາຊິກອິດສະລະ

ຊີວະປະຫວັດຫຍໍ້ຂອງແຕ່ລະທ່ານໄດ້ມີລາຍລະອຽດໃນ **ເອກະສານຄັດຕິດ 5** ທີ່ໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ.

ເນື່ອງຈາກວ່າ ບັນດາທ່ານທີ່ໄດ້ສະເໜີຂຶ້ນມາດັ່ງກ່າວຂ້າງເທິງນັ້ນ ແມ່ນມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແທດເໝາະຕໍ່ຕຳແໜ່ງໃນການເປັນສະມາຊິກສະພາບໍລິຫານຂອງ ວຈຊຕ ສະໄໝທີ 2.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການຄັດເລືອກເປັນສະມາຊິກສະພາບໍລິຫານສະໄໝທີ 2 ແທນສະໄໝທີ 1 ທີ່ຄົບອາຍຸການ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ

ລາຍລະອຽດ:

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນ.

ເນື່ອງຈາກວ່າ ທ່ານ ນາງ ໂຈວ ເຫຼີ (Ms. Zhou Lei) ຂຶ້ນມາຮັບຕຳແໜ່ງເປັນປະທານສະພາບໍລິຫານສະໄໝທີ 2, ອີງຕາມຄວາມຕ້ອງການໃນການຈັດຈັ້ງປະຕິບັດວຽກງານຕົວຈິງ ເຫັນວ່າມີຄວາມຈຳເປັນປ່ຽນຜູ້ຕາງໜ້ານິຕິບຸກຄົນໃນທະບຽນວິສາຫະກິດ ຈາກທ່ານ ເວີຍ ຫວາ (Mr. Wei Hua) ມາເປັນ ທ່ານ ນາງ ໂຈວ ເຫຼີ (Ms. Zhou Lei).

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 8: ພິຈາລະນາ ແລະ ອະນຸມັດແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ

ລາຍລະອຽດ:

ເພື່ອປະຕິບັດຕາມແຜນການນຳໃຊ້ທຶນທີ່ລະດົມໄດ້, ວຈຊຕ ໄດ້ມີການດຳເນີນວຽກງານການກະກຽມຮັບຊື້ພື້ນທີຫ້ອງການຊັ້ນ 3 ທັງໝົດ ຂອງບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອຈາກັດໃນລາຄາທີ່ບໍ່ເກີນ 1811 $/㎡(ບໍ່ລວມອາກອນ) ເຊິ່ງເປັນລາຄາຕະຫລາດໃນປະຈຸບັນນີ້, ແລະ ໄດ້ບັນລຸເປົ້າໝາຍເຈດຈຳນົງໃນເບື້ອງຕົ້ນກ່ຽວກັບການຮັບຊື້ດັ່ງກ່າວ, ພື້ນທີ່ທັງໝົດທີ່ເປັນລາຍການກ່ຽວພັນ ອາຄານລາຍລະອຽດຂອງພື້ນທີຫ້ອງການຊັ້ນ 3 ທັງໝົດດັ່ງກ່າວ ມີດັ່ງລຸ່ມນີ້:

ເລກທີ່ຫ້ອງການ	ເນື້ອທີ່ (㎡)	ໄລຍະການເຊົ່າ	ຄ່າເຊົ່າ($/ປີ)	ໝາຍເຫດ
F3001-1	33.11			
F3001-2	61.47	2019.10.01—2024.12.31	7376.4	
F3002	165.01	2019.10.01—2024.12.31	19801.2	

F3003	83. 37	2019. 10. 01—2024. 12. 31	10004. 4	
F3004	99. 07	2019. 10. 01—2024. 12. 31	11888. 4	
F3005	153. 54	2019. 10. 01—2024. 12. 31	18424. 8	
F3006	94. 58	2019. 10. 01—2024. 12. 31	11349. 6	
F3007	94. 58	2019. 10. 01—2024. 12. 31	11349. 6	
F3008	165. 01	2019. 10. 01—2024. 12. 31	19801. 2	
F3009	83. 37	2019. 10. 01—2024. 12. 31	10004. 4	
F3010	99. 07			
F3011	153. 54			
F3012	94. 58			
ທັງໝົດ1	1380. 3	ທັງໝົດ2	120000	

ໄລຍະເວລາຂອງສັນຍາການເຊົ່າຊັບສິນຂ້າງເທິງແມ່ນຫ້າປີ ຄ່າເຊົ່າປະຈຳປີແມ່ນ 1.08 ຕື້ກີບ, ເຊິ່ງສາມາດນຳ ກະແສເງິນສົດທີ່ໝັ້ນຄົງ ແລະ ຕໍ່ເນື່ອງມາໃຫ້ບໍລິສັດໃນແຕ່ລະປີຫຼັງຈາກຮັບຊື້ແລ້ວ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າການຮັບຊື້ພື້ນທີ່ຫ້ອງການດັ່ງກ່າວ ແມ່ນຖືກຕາມແຜນ ການນຳໃຊ້ທຶນທີ່ລະດົມໄດ້, ຖ້າຮັບຊື້ແລ້ວ ສາມາດສ້າງກະແສເງິນສົດຢ່າງໝັ້ນຄົງ ແລະ ຕໍ່ເນື່ອງໃຫ້ ຈຈຊຕ ເພາະເປັນພື້ນທີ່ ທີ່ຢູ່ໃນໄລຍະສັນຍາເຊົ່າ. ເຫັນດີການຮັບຊື້ພື້ນທີ່ຫ້ອງການດັ່ງກ່າວໃນລາຄາທີ່ບໍ່ເກີນ 1811 $/㎡(ບໍ່ລວມອາກອນ) ເຊິ່ງເປັນ ລາຄາຕະຫລາດໃນປະຈຸບັນນີ້, ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ ແລະ ມອບສິດໃຫ້ສະພາບໍລິຫານເປັນ ຜູ້ດຳເນີນການອະນຸມັດລາຄາຮັບຊື້ຕົວຈິງ, ຖ້າລາຄາຮັບຊື້ຕົວຈິງສູງກວ່າ 1811 $/㎡(ບໍ່ລວມອາກອນ), ໃຫ້ສະເໜີຕໍ່ກອງ ປະຊຸມຜູ້ຖືຮຸ້ນພິຈາລະນາຄືນໃຫມ່.

<u>ຄະແນນສຽງທີ່ຕ້ອງການ:</u>

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 9: ພິຈາລະນາ ແລະ ອະນຸມັດການປ່ຽນແທນຊັບຄ้ຳປะกัน ແລะ ການต่ออายุการสัมยาเงินกู้

<u>ລายละอຽด:</u>

อจซต("ผู้กู้") กับ บໍลิสัด พัดทะนาสูมเสดถะกิดการค้าคิบอิงจอม หมองจันตอมเหมือจาภัด("ผู้ให้กู้")ได้มีการเจละจากันย่างพ้อมพรึงก่ยวกับการต่สัมยาเงินกู้ละหว่างสองฝ่ายเซิ่งมีการลิงนามในตอมเอลาสางตั้งบໍลิสัด อจซต, เนื้อในต้นต่ของสัมยาดั่งก่าอ โดยสังลอมมีดั่งนี้:

1. จำนอมเงินกู้: 64,232,500,000 (หกสิบสี่ต้สองร้อยสามสิบสองล้านห้าแสม) กีบ;
2. ดอกเบ้ย: ดอกเบ้ยเงินกู้ แม่น คิดไล่เป้น 3.5 (สามจุดห้า) ส่อมร้อยต่ปี ของจำนอมเงินกู้;
3. อีทีการชำละเงินคืน: เมื่อเถิงอันชำละเงินคืน, ผู้กู้มีพันทะชำละเงินกู้ และ ดอกเบ้ย ถ้วนกรอบให้ ผู้ให้กู้ด้อยการชำละด้อยเงินสิด หรือ ชำละด้อยหุ้นของบໍลิสัดผู้กู้ ตามละบรยบการก่ยวข้อง;
4. ไลยะเอลาการกู้ยืม: ต่ธอดเถิงอันที 29 พะจิก 2021;
5. หลักชับค้ำปะกัน: อาคามวรุงจันเซ็นเตี จำนอม 68 (หกสิบแปด) ห้อง.

อิงตามสะพาบการต้อจิงของการเพิ่มขึ้นของลาคาชับสิม, คะนะบໍลิหารได้เพิ่มปะสิดทิพาบของสิมเชื่อ จำนำเงินกู้ และ สะเหม ให้ป่ยนชับสิมการกู้ยืมเงินจาก 68 ห้องเป้น 51 ห้องลายละอยดต่ไปนี้:

ลำดับ	เลกที่ใบยั้งยืน	ปะเพดชับสิม	เลกที่ห้อง	เนื้อที่สามาดนำใช้	ชั้น	ลาคาห้อหน่อย（โดล้า）	มูนค่าการปะเมิน（โดล้า）
1	01027	Retail	A1003	603.76	ชั้น1	5,463.84	3,298,848.04
2	01035	Retail	A2003	964.94	ชั้น2	5,463.84	5,272,277.77
3	01059	Office	F6020	23.10	ชั้น 6	1,884.31	43,527.56
4	01066	Office	F6027	15.75	ชั้น 6	1,884.31	29,677.88
5	01040	Office	F6001	14.36	ชั้น 6	1,884.31	27,058.69
6	01041	Office	F6002	22.15	ชั้น 6	1,884.31	41,737.47
7	01042	Office	F6003	22.00	ชั้น 6	1,884.31	41,454.82
8	01043	Office	F6004	22.91	ชั้น6	1,884.31	43,169.54
9	01044	Office	F6005	22.91	ชั้น 6	1,884.31	43,169.54
10	01045	Office	F6006	22.00	ชั้น 6	1,884.31	41,454.82
11	01046	Office	F6007	22.15	ชั้น 6	1,884.31	41,737.47

12	01047	Office	F6008	16.87	ຊັ້ນ 6	1,884.31	31,788.31
13	01048	Office	F6009	47.03	ຊັ້ນ 6	1,884.31	88,619.10
14	01049	Office	F6010	22.68	ຊັ້ນ 6	1,884.31	42,736.15
15	01050	Office	F6011	22.73	ຊັ້ນ 6	1,884.31	42,830.37
16	01051	Office	F6012	22.73	ຊັ້ນ 6	1,884.31	42,830.37
17	01052	Office	F6013	22.73	ຊັ້ນ 6	1,884.31	42,830.37
18	01053	Office	F6014	22.73	ຊັ້ນ 6	1,884.31	42,830.37
19	01054	Office	F6015	22.73	ຊັ້ນ 6	1,884.31	42,830.37
20	01055	Office	F6016	47.23	ຊັ້ນ 6	1,884.31	88,995.96
21	01056	Office	F6017	17.00	ຊັ້ນ 6	1,884.31	32,033.27
22	01057	Office	F6018	22.35	ຊັ້ນ 6	1,884.31	42,114.33
23	01058	Office	F6019	22.17	ຊັ້ນ 6	1,884.31	41,775.15
24	01060	Office	F6021	23.10	ຊັ້ນ 6	1,884.31	43,527.56
25	01061	Office	F6022	23.10	ຊັ້ນ 6	1,884.31	43,527.56
26	01062	Office	F6023	22.97	ຊັ້ນ 6	1,884.31	43,282.60
27	01063	Office	F6024	24.53	ຊັ້ນ 6	1,884.31	46,222.12
28	01064	Office	F6025	33.61	ຊັ້ນ 6	1,884.31	63,331.66
29	01065	Office	F6026	15.62	ຊັ້ນ 6	1,884.31	29,432.92
30	01067	Office	F6028	25.88	ຊັ້ນ 6	1,884.31	48,765.94
31	01068	Office	F6029	24.37	ຊັ້ນ 6	1,884.31	45,920.63
32	01069	Office	F6030	24.37	ຊັ້ນ 6	1,884.31	45,920.63
33	01070	Office	F6031	24.37	ຊັ້ນ 6	1,884.31	45,920.63
34	01071	Office	F6032	50.43	ຊັ້ນ 6	1,884.31	95,025.75
35	01072	Office	F6033	17.47	ຊັ້ນ 6	1,884.31	32,918.90
36	01073	Office	F6034	16.73	ຊັ້ນ 6	1,884.31	31,524.51

37	01074	Office	F6035	17.00	ຊັ້ນ 6	1,884.31	32,033.27
38	01075	Office	F6036	14.80	ຊັ້ນ 6	1,884.31	27,887.79
39	01076	Office	F6037	13.31	ຊັ້ນ 6	1,884.31	25,080.17
40	01077	Office	F6038	14.80	ຊັ້ນ 6	1,884.31	27,887.79
41	01078	Office	F6039	15.18	ຊັ້ນ 6	1,884.31	28,603.83
42	01079	Office	F6040	16.01	ຊັ້ນ 6	1,884.31	30,167.80
43	01080	Office	F6041	10.00	ຊັ້ນ 6	1,884.31	18,843.10
44	01081	Office	F6042	12.27	ຊັ້ນ 6	1,884.31	23,120.48
45	01082	Office	F6043	11.84	ຊັ້ນ 6	1,884.31	22,310.23
46	01083	Office	F6044	10.80	ຊັ້ນ 6	1,884.31	20,350.55
47	01084	Office	F6045	11.23	ຊັ້ນ 6	1,884.31	21,160.80
48	01085	Office	F6046	9.90	ຊັ້ນ 6	1,884.31	18,654.67
49	01086	Office	F6047	23.30	ຊັ້ນ 6	1,884.31	43,904.42
50	01087	Office	F6048	24.00	ຊັ້ນ 6	1,884.31	45,223.44
51	01088	Office	F6049	46.02	ຊັ້ນ 6	1,884.31	86,715.95
			ທັງໝົດ	**2,642.02**			**10,593,593.42**

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າມູນຄ່າຂອງຊັບສິນຄ້ຳປະກັນ 68 ຫ້ອງນັ້ນ ໄດ້ມີການເພີ່ມຂຶ້ນ, ມັນຈຳເປັນຕ້ອງມີການປັບປ່ຽນຫຼັກຊັບຄ້ຳປະກັນໂດຍອີງຕາມສະພາບຕົວຈິງຂອງຊັບສິນດັ່ງກ່າວ, ການປັບປ່ຽນຫຼັກຊັບຄ້ຳປະກັນ ແລະ ການຕໍ່ສັນຍາເງິນກູ້ຮອດ ວັນທີ 29 ພະຈິກ 2021, ແມ່ນສອດຄ່ອງກັບຄວາມຕ້ອງການຕົວຈິງຂອງການພັດທະນາທຸລະກິດຂອງ ວຈຊຕ, ແລະຈະບໍ່ມີຜົນກະທົບໃດໆຕໍ່ການດຳເນີນທຸລະກິດຂອງບໍລິສັດ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 10: ພິຈາລະນາ ແລະ ອະນຸມັດການສືບຕໍ່ວ່າຈ້າງບໍລິສັດ ເອີນແອນຢັ້ງ ລາວ ຈຳກັດເປັນບໍລິສັດກວດສອບບັນຊີ ໃຫ້ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ລາຍລະອຽດ:

ສືບຕໍ່ໃຫ້ບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ ເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ໄລຍະການວ່າຈ້າງແມ່ນນັບແຕ່ວັນທີ 1 ມັງກອນ 2020 ເຖິງ ວັນທີ 31 ທັນວາ 2020, ຄ່າບໍລິການການກວດສອບແມ່ນ 34,000 ໂດລາ (ສາມໝື່ນສີ່ພັນໂດລາຖ້ວນ).

ຕາຕະລາງສົມທຽບລາຄາຈ້າງຜູ້ກວດສອບ ໄລຍະເວລາ 3 ປີ ມີດັ່ງນີ້:

ລ/ດ	ຜູ້ກວດສອບບັນຊີ	ລາຄາຫົວໜ່ວຍ	ປີ		
			2017	2018	2019
1	ບໍລິສັດ ເອີນ ແອນ ຢັ້ງ	ໂດລາ ສຫລ	30000		
2	ບໍລິສັດ ເອີນ ແອນ ຢັ້ງ	ໂດລາ ສຫລ		38000	
3	ບໍລິສັດ ເອີນ ແອນ ຢັ້ງ	ໂດລາ ສຫລ			34000

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນວ່າປີນີ້ແມ່ນປີທີ່ສາມທີ່ຈ້າງຕິດລຽນກັນ ແລະ ສອດຄ່ອງກັບລະບຽບການທີ່ກ່ຽວຂ່ອງຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ລາຄາຈ້າງໄດ້ມີການລົດລົງ 4000 ໂດລາ, ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການສືບຕໍ່ເອົາບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ ເປັນບໍລິສັດກວດສອບບັນຊີພາຍນອກໃຫ້ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສຳລັບປີ 2020.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 11: ພິຈາລະນາ ແລະ ອະນຸມັດການຄັດເລືອກສະມາຊິກຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆ ຂອງບໍລິສັດ

ລາຍລະອຽດ:

ຍ້ອນວ່າສະມາຊິກຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆຂອງບໍລິສັດໄດ້ຄົບອາຍຸການແລ້ວ, ຈຶ່ງມີຄວາມຈຳເປັນຄັດເລືອກຕັ້ງສະມາຊິກໃໝ່ຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆຂອງບໍລິສັດ ເຊິ່ງມີລາຍລະອຽດດັ່ງນີ້:

1. ຄະນະອຳນວຍການ

1) ທ່ານ ຫຼີສ່ຽວຕົງ, ປະທານຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການບໍລິຫານ (CEO)

2) ທ່ານ ອູ່ ຊິງຫວາ, ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານປະຕິບັດການ (COO)

3) ທ່ານ ເຊີນ ເຟີຍຫູ້, ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການເງິນ (CFO)

2. ຄະນະກຳມະການກວດສອບ

1) ທ່ານ ນາງ ເຕົ້ງຢູ່, ປະທານຄະນະກຳມະການກວດສອບ/ສະມາຊິກອິດສະຫຼະ

2) ທ່ານ ນາງ ໂຈວ ເຫຼີຍ, ຄະນະກຳມະການກວດສອບ/ສະມາຊິກ

3) ທ່ານ ວຽງສະຫວັນ ພັນທະລີ, ຄະນະກຳມະການກວດສອບ/ສະມາຊິກອິດສະຫຼະ

3. ຄະນະການມະການຄຸ້ມຄອງຄວາມສ່ຽງ

1) ທ່ານ ເຊີນ ເຟີຍຫູ້, ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກ

2) ທ່ານ ຈໍຊິ່ງ ບິອສີເນ່ັ່ງມາ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກອິດສະຫຼະ;

3) ທ່ານ ວຽງສະຫວັນ ພັນທະລີ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ/ສະມາຊິກອິດສະຫຼະ;

4. ຄະນະການມະການຄັດເລືອກ

1) ທ່ານ ບູລະພາ ສັນຕິຄີງຄາ, ປະທານຄະນະກຳມະການຄັດເລືອກ/ສະມາຊິກ;

2) ທ່ານ ນາງ ເຕົ້ງຢູ່, ຄະນະກຳມະການຄັດເລືອກ/ສະມາຊິກອິດສະຫຼະ;

3) ທ່ານ ຈໍຊິ່ງ ບິອສີເນ່ັ່ງມາ, ຄະນະກຳມະການຄັດເລືອກ/ສະມາຊິກອິດສະຫຼະ;

5. ຄະນະກຳມະການການິດຄ່າຕອບແທນ

1) ທ່ານ ອູ່ ຊິງຫວາ, ປະທານຄະນະກຳມະການກຳນົດຄ່າຕອບແທນ/ສະມາຊິກ;

2) ທ່ານ ສ່ຽວ ໂຢງ, ຄະນະກຳມະການການິດຄ່າຕອບແທນ/ສະມາຊິກອິດສະຫຼະ;

3) ທ່ານ ນາງ ເຕົ້ງຢູ່, ຄະນະກຳມະການກຳນົດຄ່າຕອບແທນ/ສະມາຊິກອິດສະຫຼະ;

6. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

1) ທ່ານ ບູລະພາ ສັນຕິຄີງຄາ, ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກ;

2) ທ່ານ ຈໍຊິ່ງ ບິອສີເນ່ັ່ງມາ, ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກອິດສະຫຼະ;

3) ທ່ານ ສ່ຽວ ໂຢງ, ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ/ສະມາຊິກອິດສະຫຼະ;

ສະມາຊິກຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆຂອງບໍລິສັດ ມີອາຍຸການສອງປີ ໂດຍເລີ່ມ

ຈາກມື້ທີ່ໄດ້ຮັບການອະນຸມັດໃນກອງປະຊຸມຜູ້ຖືຮຸ້ນຄັ້ງນີ້.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ ການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳ ນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ.

ວາລະທີ 12: ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

ລາຍລະອຽດ:

ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 154 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມ ຜູ້ຖືຮຸ້ນ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດສອດຄ່ອງກັບການປ່ຽນແປງຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານຂອງບໍລິສັດ, ເຫັນວ່າມີຄວາມຈຳເປັນຕ້ອງດັດແກ້ເນື້ອໃນຂອງມາດ ຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ດັ່ງນີ້:

1. ດັດແກ້ເນື້ອໃນມາດຕາ 9. ຜູ້ອຳນວຍການ: ໂດຍມີການປ່ຽນແປງຜູ້ອຳນວຍການ ເຊັ່ນ ຈາກທ່ານ ຫຼີວ ກວາງຊ້ານ (Mr. Liu Guangcan) ປ່ຽນເປັນທ່ານ ນາງ ໂຈວ ເຫຼີ່ຍ (Ms. Zhou Lei), ຈາກທ່ານ ສາຍ ຈ້ຽນຫົງ (Mr. Chai Jianhong) ປ່ຽນເປັນທ່ານ ເຊີ່ນ ເຟີ່ຍຫູ້ (Mr. Sun Feihu), ຈາກທ່ານ ຫຼູ ຈ້ຽນ (Mr. Lu Jian)ເຊິ່ງ ປ່ຽນເປັນທ່ານ ຈໍຊິ່ງ ບ໋ອສເນ່ັ່ງມາ ມີລາຍລະອຽດດັ່ງນີ້:

ຜູ້ອຳນວຍການຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ມີ 11 ຄົນ, ໃນນີ້:

ກ. ຜູ້ຖືຮຸ້ນເປັນຜູ້ອຳນວຍການ 0 ຄົນ, ປະກອບດ້ວຍ: ບໍ່ມີ.

ຂ. ຈ້າງບຸກຄົນພາຍນອກ ເປັນຜູ້ອຳນວຍການ 11 ຄົນ, ປະກອບດ້ວຍ:

ຜູ້ທີໜຶ່ງ(ຜູ້ອຳນວຍການໃຫຍ່):

- ຊື່ ແລະ ນາມສະກຸນ: ທ່ານ ຫຼີ່ສ່ຽວຕົ໋ງ (Mr. Li Xiaodong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິ໋ງ, ແຂວງ ຢຸນນານ, ປະເທດຈີນ

- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E99829448, ລົງວັນທີ 10 ກໍລະກົດ 2017

ຜູ່ທີສອງ:

- ຊື່ ແລະ ນາມສະກຸນ: ທ່ານ ເວີຍ ຫວາ (Mr. Wei Hua)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E86429790, ລົງວັນທີ 09 ພະຈິກ 2016

ຜູ່ທີສາມ:

- ຊື່ ແລະ ນາມສະກຸນ: ທ່ານ ນາງ ໂຈວ ເຫຼີ (Ms. Zhou Lei)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E93355975, ລົງວັນທີ 27 ກຸມພາ 2017

ຜູ່ທີສີ່:

- ຊື່ ແລະ ນາມສະກຸນ: ທ່ານ ນາງ ອໍລະໄທ ສັນຕິຄົງຄາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036797, ລົງວັນທີ 30 ມັງກອນ 2015

ຜູ່ທີຫ້າ:

- ຊື່ ແລະ ນາມສະກຸນ: ທ່ານ ບູລະພາ ສັນຕິຄົງຄາ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: 01-0036796, ລົງວັນທີ 30 ມັງກອນ 2015

ຜູ່ທີຫົກ:

- ຊື່ ແລະ ນາມສະກຸນ: ທ່ານ ອູ່ ຊິງຫວາ (Mr. Wu Xinghua)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນເຫີເຝີ, ແຂວງ ອ່ານຮຸຍ, ປະເທດຈີນ

- ທີ່ຢູ່ໃນ ສປປ ລາວ: ບ້ານໂພນສະອາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E55964760, ລົງວັນທີ 02 ກຸມພາ 2016

ຜູ່ທີເຈັດ:

- ຊື່ ແລະ ນາມສະກຸນ: ທ່ານ ເຊີນ ເຟີຍຫູ້ (Mr. Sun Feihu)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E61792462, ລົງວັນທີ 12 ພະຈິກ 2015

ຜູ່ທີແປດ:

- ຊື່ ແລະ ນາມສະກຸນ: ທ່ານ ສ່ຽວ ໂຢງ (Mr. Xiao Yong)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: G28936820, ລົງວັນທີ 15 ກໍລະກົດ 2008

ຜູ່ທີເກົ້າ:

- ຊື່ ແລະ ນາມສະກຸນ: ທ່ານ ນາງ ເຕີ້ງຢູ່ (Ms. Deng Yu)
- ສັນຊາດ: ຈີນ
- ທີ່ຢູ່ໃນຕ່າງປະເທດ: ນະຄອນຄຸນໝິງ, ແຂວງ ຢຸນນານ, ປະເທດຈີນ
- ທີ່ຢູ່ໃນ ສປປ ລາວ: ບ້ານໂພນສະອາດ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ໜັງສືຜ່ານແດນເລກທີ: E41274346, ລົງວັນທີ 22 ເມສາ 2015

ຜູ່ທີສິບ:

- ຊື່ ແລະ ນາມສະກຸນ: ທ່ານ ວຽງສະຫວັນ ພັນທະລີ
- ສັນຊາດ: ລາວ
- ທີ່ຢູ່ໃນ ສປປ ລາວ: ບ້ານແສງສະຫວ່າງ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
- ບັດປະຈຳຕົວເລກທີ: A1-0010349, ລົງວັນທີ 28 ມີນາ 2014

ຜູ່ທີສິບເອັດ:

- ຊື່ ແລະ ນາມສະກຸນ: ຈໍຊົ່ງ ບົວສີເມັ່ງມາ
- ສັນຊາດ: ລາວ

- ທີ່ຢູ່ໃນ ສປປ ລາວ: ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

- ໜັງສືຜ່ານແດນເລກທີ: 01-18 005815, ລົງວັນທີ 05 ຕຸລາ 2018

ຜູ້ອຳນວຍການທີ່ມີອຳນາດເຊັນຜູກພັນບໍລິສັດ ແມ່ນ ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong) ລົງລາຍເຊັນ ແລະ ປະທັບກາບໍລິສັດ ເພື່ອປະຕິບັດໜ້າທີ່ໃນນາມ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

2. ດັດແກ້ເນື້ອໃນມາດຕາ 12. ສະພາບໍລິຫານ: ໂດຍມີການປ່ຽນແປງສະມາຊິກສະພາບໍລິຫານ ເຊັ່ນ ຈາກ ທ່ານ ຫຼີ ກວາງຊ້ານ (Mr. Liu Guangcan) ປ່ຽນເປັນທ່ານ ນາງ ໂຈ ເຫຼີ (Ms. Zhou Lei), ຈາກທ່ານ ສາຍ ຈ້ຽນຫົ໋ງ (Mr. Chai Jianhong) ປ່ຽນເປັນທ່ານ ເຊີ ເຟີ່ຍຫູ້ (Mr. Sun Feihu), ຈາກທ່ານ ຫຼູ ຈ້ຽນ (Mr. Lu Jian) ປ່ຽນເປັນທ່ານ ຈໍຊິ໋ງ ບິ໋ວສີເນ໋ັ່ງມາ ມີລາຍລະອຽດດັ່ງນີ້:

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຕົກລົງກ່ຽວກັບສະພາບໍລິຫານ ດັ່ງນີ້:

- (√) ມີສະພາບໍລິຫານນັບແຕ່ມື້ສ້າງຕັ້ງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ເຊິ່ງປະກອບດ້ວຍ:

- ປະທານສະພາບໍລິຫານ 1 ຄົນ ຄື: Ms. Zhou Lei

- ຮອງປະທານສະພາບໍລິຫານ 1 ຄົນ ຄື: ທ່ານ ນາງ ອໍລະໄທ ສັນຕິຖິງຄາ

- ສະມາຊິກສະພາບໍລິຫານ 9 ຄົນ ຄື: 1.ທ່ານ ເວີ ຫວາ (Mr. Wei Hua)

2.ທ່ານ ບູລະພາ ສັນຕິຖິງຄາ(Yao Bin)

3. Mr. Li Xiaodong

4. Mr. Wu Xinghua

5. Mr. Sun Feihu

6. Mr. Xiao Yong(ສະມາຊິກອິດສະລະ)

7. Ms. Deng Yu(ສະມາຊິກອິດສະລະ)

8 ທ່ານ ວຽງສະຫວັນ ພັນທະລີ(ສະມາຊິກອິດສະລະ)

9. ທ່ານ ຈໍຊິ໋ງ ບິ໋ວສີເນ໋ັ່ງມາ(ສະມາຊິກອິດສະລະ)

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດ.

ຄະແນນສຽງທີ່ຕ້ອງການ:

ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ (2/3)ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ, ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນ ຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ເອກະສານຄັດຕິດ 2

ບົດລາຍງານບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຄັ້ງທີ 1 ປະຈຳປີ 2019

ເວລາ ແລະ ສະຖານທີ່

ກອງປະຊຸມຈັດຂຶ້ນໃນວັນທີ 29 ພະຈິກ 2019, ເວລາ: 15:00 ໂມງ ທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ການເປີດກອງປະຊຸມ

ທ່ານ ຫຼີ ສ່ຽວຕິງ ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ຮັບມອບສິດຈາກ ທ່ານ ເວີ ຫວາ ປະທານສະພາບໍລິຫານ ໃຫ້ເປັນປະທານກອງປະຊຸມວິສາມັນຜູ້ຖືຮຸ້ນ ວາລະ ຄັ້ງທີ 1 ປະຈຳປີ 2019 ໃນຄັ້ງນີ້ແທນ, ເນື່ອງຈາກຕິດພາລະກິດບໍ່ສາມາດມາຮ່ວມກອງປະຊຸມດັ່ງກ່າວໄດ້ດ້ວຍຕົວເອງ. ກອງປະຊຸມມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 30 ທ່ານ ແລະ ມອບສິດໃຫ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 2 ທ່ານ, ລວມ ຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 32 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 146,525,700 ຮຸ້ນ ຫຼື ເທົ່າກັບ 99.54 ສ່ວນ ຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ, ເລຂານຸການ ກອງປະຊຸມຈຶ່ງໄດ້ກ່າວຈຸດປະສົງ ແລະ ແນະນຳທ່ານຜູ້ເຂົ້າຮ່ວມກອງປະຊຸມ ລາຍລະອຽດດັ່ງຕໍ່ໄປນີ້:

1.	ທ່ານ ຫຼີ ສ່ຽວຕິງ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ວຽງຈັນເຊັ້ນ ເຕີ ລາວ ມະຫາຊົນ;
2.	ທ່ານ ຊິນ ເຟີຍຫຸ	ອຳນວຍການຝ່າຍການເງິນ (CFO);
3.	ທ່ານ ຊູ ໂປ	ອຳນວຍການຝ່າຍປະຕິບັດການ (COO);
4.	ທ່ານ ແສງອາລຸນ ວິໄລສານ	ຜູ້ຕາງໜ້າຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບໃນນາມ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
5.	ທ່ານ ນ. ວັນນະພອນ ສຸນັນທາ	ຜູ້ຕາງໜ້າຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບໃນນາມ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
6.	ທ່ານ ສຸກສັນຍາ ແພງດີ	ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

7. ທ່ານ ນ. ເພັດມະນີ ພຸດຈັນທະວົງສາ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ, ໃນນາມ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;

ລວມທັງຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນ ແລະ ແຂກຜູ້ມີກຽດທີ່ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

ຫຼັງຈາກນັ້ນເລຂານຸການກອງປະຊຸມກໍໄດ້ລາຍງານແຕ່ລະວາລະຂອງກອງປະຊຸມໃນມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບເຊິ່ງມີລາຍລະອຽດດັ່ງນີ້:

<u>ວາລະກອງປະຊຸມ:</u>

1. ພິຈາລະນາ ແລະ ຮັບຮອງແຜນການບໍ່ແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;
2. ພິຈາລະນາ ແລະ ຮັບຮອງແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ;
3. ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນບາງສ່ວນ;
4. ພິຈາລະນາ ແລະ ຮັບຮອງການສືບຕໍ່ໃຫ້ບໍລິສັດ ເອັນແອນຢັ້ງ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ;
5. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ແລະ ລາຕຳແໜ່ງສະພາບໍລິຫານອິດສະຫຼະ;
6. ພິຈາລະນາ ແລະ ຮັບຮອງການປັບປຸງໂຄງຮ່າງຄະນະກຳມະການສະພາບໍລິຫານຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017;
7. ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1 ປະຈຳປີ 2019.

<u>ການລົງຄະແນນສຽງ:</u>

1. ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.

2. ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານກອງປະຊຸມຈະຖາມກອງປະຊຸມວ່າມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.

- ຖ້າຫາກມີຜູ້ຖືຮຸ້ນໃດບໍ່ເຫັນດີ ຫຼື ບໍ່ຮັບຮອງໃຫ້ໃຫ້ຜູ້ຖືຮຸ້ນລົງລາຍເຊັນໃນວາລະທີ່ບໍ່ເຫັນດີ, ຫຼັງຈາກຜ່ານການລາຍງານແຕ່ລະວາລະ ປະທານກອງປະຊຸມຈະຖາມຄະແນນສຽງທີ່ບໍ່ເຫັນດີ ໃຫ້ຜູ້ຖືຮຸ້ນຍົກມືຂຶ້ນ ຈົນກວ່າຈະມີພະນັກງານມາເກັບບັດເພື່ອນຳໄປນັບຄະແນນສຽງ. ສ່ວນຄະແນນສຽງທີ່ບໍ່ຄັດຄ້ານຈະຖືວ່າເຫັນດີ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

3. ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວໄປບັນທຶກຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

<u>ການນັບຜົນການລົງຄະແນນສຽງ:</u>

1. ການນັບຜົນການລົງຄະແນນສຽງໃນແຕ່ລະວາລະຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

2. ເນື່ອງຈາກວ່າ ເນື້ອໃນວາລະທີ 2 ຂອງກອງປະຊຸມໃນຄັ້ງນີ້ແມ່ນລາຍການທີ່ກ່ຽວພັນ, ອີງຕາມຂໍ້ຕົກລົງວ່າດ້ວຍລາຍການທີ່ກ່ຽວພັນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0023, ລົງວັນທີ 26 ຕຸລາ 2016. ມາດຕາ 11 ການອະນຸມັດລາຍການທີ່ກ່ຽວພັນ ໂດຍກອງປະຊຸມຜູ້ຖືຮຸ້ນ, ຜູ້ຖືຮຸ້ນທີ່ເປັນບຸກຄົນທີ່ກ່ຽວພັນ ແລະ ນິຕິບຸກຄົນທີ່ກ່ຽວພັນ ບໍ່ມີສິດໃນການລົງຄະແນນສຽງ ແລະ ບໍ່ມີສິດມອບໃຫ້ຄົນອື່ນລົງຄະແນນສຽງແທນ. ດັ່ງນັ້ນ, ໃນວາລະທີ 2 ນີ້ ທ່ານ ເວີ ຫວາ ຈຶ່ງບໍ່ມີສິດລົງຄະແນນສຽງ, ການນັບຄະແນນໃນວາລະນີ້ຈະນັບສະເພາະຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນທີ່ຜູ້ທີ່ມາຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ ຍົກເວັ້ນ ທ່ານ ເວີ ຫວາ.

3. ປະທານເຈົ້າໜ້າທີ່ດ້ານປະຕິບັດການ ຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກປະທານລາຍງານວາລະຄົບຖ້ວນແລ້ວ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ.

4. ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ສປປ ລາວ ມາດຕາ 143 ກຳນົດ, ຖ້າຄະແນນສຽງຄັດຄ້ານຫຼາຍກວ່າ 50 ສ່ວນຮ້ອຍຂອງຄະແນນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ, ຄະແນນສຽງຄັດຄ້ານນັ້ນຈະຖືວ່າມີຜົນສັກສິດຕາມກົດໝາຍ.

5. ການແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ

   ວຈຊຕ ໄດ້ແຕ່ງຕັ້ງທ່ານ ຊູ ໂປ (COO) ເປັນປະທານຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ, ທ່ານ ອະສອນສິນ ທີ່ເປັນຕົວແທນຈາກຜູ້ຖືຮຸ້ນລາຍຍ່ອຍ ແລະ ທ່ານ ນາງ ເສີນຫ້າຍຫວາ ເປັນສະມາຊິກຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ເວລາຕໍ່ມາ, ທ່ານປະທານກອງປະຊຸມໄດ້ດຳເນີນກອງປະຊຸມວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1 ປະຈຳປີ 2019 ໂດຍ ໄດ້ລາຍງານເປັນແຕ່ລະວາລະເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງແຜນການບໍ່ແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ

ປະທານກອງປະຊຸມໄດ້ມອບໃຫ້ ອານວຍການຝ່າຍການເງິນ (CFO) ເປັນຜູ້ລາຍງານແຜນການບໍ່ແບ່ງເງິນປັນຜົນ ປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ, ຜ່ານມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2019 ເຫັນດີ ສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2019 ເພື່ອພິຈາລະນາ ແລະ ຮັບຮອງກ່ຽວກັບແຜນການບໍ່ດຳເນີນການແບ່ງເງິນປັນຜົນປະຈຳປີ 2018 ຂອງ ວຈຊຕ ໃຫ້ຜູ້ຖືຮຸ້ນ. ສະພາບໍລິຫານມີຄຳເຫັນວ່າ ບໍລິສັດ ວຈຊຕ ເປັນບໍລິສັດຈົດທະບຽນໃໝ່, ມີໄລຍະການເຂົ້າຈົດ ທະບຽນທີ່ຂ້ອນຂ້າງສັ້ນ ແລະ ຍັງຕ້ອງການນຳໃຊ້ທຶນຫຼາຍໃນການປະຕິບັດແຜນການພັດທະນາ. ເພື່ອສ້າງຜົນປະໂຫຍດ ໃຫ້ແກ່ຜູ້ຖືຮຸ້ນເພີ່ມຂຶ້ນ, ຍອດເຫຼືອຂອງຜົນກຳໄລປະຈຳປີ 2018 ຈະສະສົມເຂົ້າໃນປີຖັດໄປ.

ຫຼັງຈາກ ອຳນວຍການຝ່າຍການເງິນ (CFO) ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້ , ແຕ່ບໍ່ມີຜູ້ຖືຮຸ້ນ ທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການບໍ່ແບ່ງເງິນປັນຜົນ ປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ.

ມະຕິ: ເຫັນດີຮັບຮອງແຜນການບໍ່ແບ່ງເງິນປັນຜົນປະຈຳປີ 2018 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ.

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ

ປະທານກອງປະຊຸມໄດ້ເປັນຜູ້ລາຍງານດ້ວຍຕົວເອງ ກ່ຽວກັບແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວ ພັນ, ເຊິ່ງລວມພື້ນທີ່ທັງ 4 ຫ້ອງແມ່ນ 1078.29 ຕາແມັດ, ລາຍໄດ້ຈາກຄ່າເຊົ່າແມ່ນ 221,588.28 ໂດລ/ປີ. ພື້ນທີ່ ຫ້ອງການ 4 ຫ້ອງດັ່ງກ່າວນີ້ແມ່ນພື້ນທີ່ທີ່ຕິດພັນຄ່າເຊົ່າຢູ່ແລ້ວ, ຫຼັງຈາກທີ່ຮັບຊື້ແລ້ວກໍຈະສ້າງລາຍຮັບໃຫ້ແກ່ບໍລິສັດ ທັນທີ; ລາຍການທີ່ກ່ຽວພັນດັ່ງກ່າວນີ້ ລາຄາ 1811 $/m², ລາຄາແມ່ນຖືກຕ້ອງ ແລະ ເປັນທາ ສອດຄ່ອງກັບກົດລະບຽບທີ່ ກ່ຽວຂ້ອງຂອງ ສຄຄຊ; ສະກຸນເງິນທີ່ນຳໃຊ້ ແລະ ຄິດໄລ່ແມ່ນນຳໃຊ້ສະກຸນເງິນລາວຢ່າງເປັນເອກະພາບ, ອັດຕາແລກປ່ຽນ ອີງຕາມອັດຕາແລກປ່ຽນໃນວັນທີລົງນາມເຊັນສັນຍາກັນຂອງ ທະນາຄານ ການຄ້າຕ່າງປະເທດລາວ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ຫຼັງຈາກປະທານກອງປະຊຸມລາຍງານໂດຍຫຍໍ້ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາແຜນການຮັບຊື້ພື້ນທີ່ຫ້ອງການ 4 ຫ້ອງທີ່ເປັນລາຍການທີ່ກ່ຽວພັນ.

- ເຫັນດີ 50,526,500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ມີສິດລົງຄະແນນສຽງໃນກອງປະຊຸມ (ໂດຍວາລະນີ້ແມ່ນທ່ານ ເວີຍ ຫວາ ບໍ່ມີສິດລົງຄະແນນສຽງ. ການນັບຄະແນນໃນວາລະນີ້ຈະນັບສະເພາະຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນທີ່ຜູ້ທີ່ມາຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ ຍົກເວັ້ນ ທ່ານ ເວີຍ ຫວາ).
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍ ຮຸ້ນບາງສ່ວນ

ປະທານກອງປະຊຸມໄດ້ມອບໃຫ້ ເລຂານຸການກອງປະຊຸມ ລາຍງານການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍ ຮຸ້ນບາງສ່ວນທີ່ຈະ ກໍ່ສ້າງຮ້ານຄ້າອ້ອມໜອງ, ຕົບແຕ່ງສູນການຄ້າ ແລະ ສຳນັກງານ ຫ້ອງການມາເປັນການຮັບຊື້ຊັບສິນແທນ, ການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນນີ້ ແມ່ນສາມາດຍົກສູງປະສິດທິພາບໃນການນຳໃຊ້ທຶນ ແລະ ສ້າງຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນຫຼາຍຂຶ້ນ, ຊັບສິນທີ່ຈະຮັບຊື້ນັ້ນ ຄວນໃຫ້ບຸລິມະສິດພິຈາລະນາຫ້ອງທີ່ຮັບຊື້ແລ້ວ ສາມາດສ້າງລາຍຮັບໃຫ້ແກ່ບໍລິສັດໄດ້ທັນທີ.

ຫຼັງຈາກເລຂານຸການກອງປະຊຸມລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍ ຮຸ້ນບາງສ່ວນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການປ່ຽນແປງວັດຖຸປະສົງໃນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍ ຮຸ້ນບາງສ່ວນທີ່ຈະ ກໍ່ສ້າງຮ້ານຄ້າອ້ອມໜອງ, ຕົບແຕ່ງສູນການຄ້າ ແລະ ສຳນັກງານ ຫ້ອງການມາເປັນການຮັບຊື້ຊັບສິນແທນ.

ຖະໜົນຄຸເວງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງການສືບຕໍ່ໃຫ້ບໍລິສັດ ເອີນແອນຢັ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ປະທານກອງປະຊຸມໄດ້ມອບໃຫ້ ອຳນວຍການຝ່າຍການເງິນ (CFO) ເປັນຜູ້ລາຍງານການສືບຕໍ່ໃຫ້ບໍລິສັດ ເອີນແອນຢັ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ. ໄລຍະການວ່າຈ້າງແມ່ນ ນັບແຕ່ວັນທີ 1 ມັງກອນ 2019 ເຖິງ ວັນທີ 31 ທັນວາ 2019, ຄ່າບໍລິການການກວດສອບແມ່ນ 38,000 ໂດລາ(ສາມໝື່ນແປດພັນໂດລາຖ້ວນ).

ຫຼັງຈາກ ອຳນວຍການຝ່າຍການເງິນ (CFO) ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້. ເຊິ່ງມີຜູ້ຖືຮຸ້ນ 1 ທ່ານຖາມຄາຖາມວ່າ:

- ຄ່າບໍລິການການກວດສອບເທົ່າກັນກັບຄ່າບໍລິການໃນປີທີ່ຜ່ານມາ ຫຼື ບໍ?
- ອຳນວຍການຝ່າຍການເງິນ (CFO) ກໍໄດ້ຕອບວ່າ: ໂດຍພື້ນຖານວຽກງານທີ່ເພີ່ມຂຶ້ນ ເຮັດໃຫ້ຄ່າບໍລິການການກວດສອບເພີ່ມຂຶ້ນຈາກປີທີ່ຜ່ານມາເລັກໜ້ອຍ ເນື່ອງຈາກການກ້າວເຂົ້າເປັນບໍລິສັດຈົດທະບຽນຕ້ອງມີບົດລາຍງານການເງິນປະຈຳໄຕມາດ, ເຊິ່ງເພີ່ມຈາກເມື່ອກ່ອນທີ່ມີພຽງແຕ່ບົດລາຍງານການເງິນ ໄລຍະ 6 ເດືອນຕົ້ນປີ ແລະ ປະຈຳປີເທົ່ານັ້ນ. ເຊິ່ງປີທີ່ຜ່ານມາຄ່າບໍລິການການກວດສອບແມ່ນ 30,000 ໂດລາ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການສືບຕໍ່ໃຫ້ບໍລິສັດ ເອີນແອນ ຢັ ລາວ ຈຳກັດເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການສືບຕໍ່ໃຫ້ບໍລິສັດ ເອີນແອນ ຢັ ລາວ ຈຳກັດ ເປັນບໍລິສັດກວດສອບບັນຊີໃຫ້ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ.

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ແລະ ລາຕຳແໜ່ງສະພາບໍລິຫານອິດສະຫຼະ

ປະທານກອງປະຊຸມໄດ້ລາຍງານກ່ຽວກັບ ການລາຕຳແໜ່ງທ່ານ ຫລຸ ຈ້ຽນ, ເນື່ອງຈາກການປັບປ່ຽນວຽກງານຈຶ່ງເຮັດໃຫ້ບໍ່ສາມາດປະຕິບັດໜ້າທີ່ຂອງສະພາບໍລິຫານອິດສະຫຼະໄດ້ ແລະ ແຕ່ງຕັ້ງທ່ານ ຈ້ຊົ່ງ ບົວສີເມັ່ງມາ ເປັນຕຳແໜ່ງສະພາ

ຖະໜົນຄຸ້ວງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ບໍລິຫານອິດສະຫຼະແທນ, ໄລຍະການດຳລົງຕຳແໜ່ງແມ່ນສອດຄ່ອງກັບໄລຍະສະພາບໍລິຫານສະໄໝປະຈຸບັນ.

ຫຼັງຈາກປະທານກອງປະຊຸມລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການແຕ່ງຕັ້ງ ທ່ານ ຈໍຊົ່ງ ບົວສີເນັ່ງມາ ເປັນຕຳແໜ່ງ ສະມາຊິກສະພາບໍລິຫານອິດສະຫຼະ ແລະ ລາຕຳແໜ່ງທ່ານ ຫລູ ຈ້ຽນ ອອກຈາກສະມາຊິກສະພາບໍລິຫານອິດສະຫຼະ.

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງການປັບປຸງໂຄງຮ່າງຄະນະກຳມະການສະພາບໍລິຫານຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017

ປະທານກອງປະຊຸມໄດ້ມອບໃຫ້ ເລຂານຸການກອງປະຊຸມລາຍງານ ອີງຕາມຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ (ສະບັບປັບປຸງ) ຂອງ

ສຄຄຊ ສະບັບລົງວັນທີ 30 ເມສາ 2019, ສະມາຊິກສະພາບໍລິຫານຕ້ອງຜ່ານການຮັບຮອງຈາກສະພາບໍລິຫານກ່ອນ, ຜ່ານມະຕິກອງປະຊຸມສະພາບໍລິຫານ ວຈຊຕ ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2019 ເຫັນດີ ສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນ ວຈຊຕ ຄັ້ງທີ 1 ປະຈຳປີ 2019 ເພື່ອພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນຂອງບົດສະເໜີຂອງກອງປະຊຸມ ສະພາບໍລິຫານຄັ້ງທີ 1 ປະຈຳປີ 2017 ກ່ຽວກັບການແຕ່ງຕັ້ງສະມາຊິກແຕ່ລະຄະນະກຳມະການຂອງສະພາບໍລິຫານ, ຫຼັງ ຈາກປັບປຸງແລ້ວມີເນື້ອໃນດັ່ງລຸ່ມນີ້:

1. ບໍລິສັດແຕ່ງຕັ້ງສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງດັ່ງລຸ່ມນີ້:
   1) ທ່ານ ວຽງສະຫວັນ ພັນທະລີ: ສະພາບໍລິຫານອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ;
   2) ທ່ານ ຈໍຊົ່ງ ບົວສີເນັ່ງມາ: ສະພາບໍລິຫານອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ
   3) ທ່ານ ສາຍ ຈ້ຽນຫົງ: ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ.
2. ສະເໜີແຕ່ງຕັ້ງສະມາຊິກຄະນະກຳມະການຄັດເລືອກດັ່ງລຸ່ມນີ້:
   1) ທ່ານ ຈໍຊົ່ງ ບົວສີເນັ່ງມາ: ສະພາບໍລິຫານອິດສະຫຼະ/ສະເໜີແຕ່ງຕັ້ງເປັນປະທານຄະນະກຳມະການຄັດເລືອກ;
   2) ທ່ານ ນາງ ເຕີ້ງ ຢຸ່: ສະພາບໍລິຫານອິດສະຫຼະ/ສະເໜີແຕ່ງຕັ້ງເປັນສະມາຊິກຄະນະກຳມະການຄັດເລືອກ;
   3) ທ່ານ ບຸລະພາ ສັນຕິຄົງຄາ: ສະເໜີແຕ່ງຕັ້ງເປັນສະມາຊິກຄະນະກຳມະການຄັດເລືອກ.
3. ແຕ່ງຕັ້ງຄະນະກຳມະການກຳນົດຄ່າຕອບແທນດັ່ງລຸ່ມນີ້:
   1) ທ່ານ ນາງ ເຕີ້ງ ຢຸ່: ສະພາບໍລິຫານອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄ່າຕອບແທນ;

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

2) ທ່ານ ສ່ຽວ ໂຢງ: ສະພາບໍລິຫານອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງຄ່າຕອບແທນ;

3) ທ່ານ ອຸ່ ຊິງຫວາ: ສະມາຊິກຄະນະກຳມະການຄຸ້ມຄອງຄ່າຕອບແທນ.

4. ແຕ່ງຕັ້ງຄະນະກຳມະການກວດສອບລາຍການທີ່ກ່ຽວພັນດັ່ງລຸ່ມນີ້:

1) ທ່ານ ສ່ຽວ ໂຢງ: ສະພາບໍລິຫານອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ;

2) ທ່ານ ຈໍຊິ່ງ ບິວສິເນັ່ງມາ: ສະພາບໍລິຫານອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ;

3) ທ່ານ ຫຼີ ກວາງຊ້ານ: ສະມາຊິກຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ.

ໄລຍະການດຳລົງຕຳແໜ່ງແມ່ນສອດຄ່ອງກັບໄລຍະສະພາບໍລິຫານສະໄໝປະຈຸບັນ.

ຫຼັງຈາກ ເລຂານຸການກອງປະຊຸມ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງເອົາການປັບປຸງໂຄງຮ່າງຄະນະກຳມະການສະພາບໍລິຫານຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017.

- ເຫັນດີ 146,525,700 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ວາລະ ຄັ້ງທີ 1 ປະຈຳປີ 2019

ປະທານກອງປະຊຸມໄດ້ລາຍງານການລາຕຳແໜ່ງທ່ານ ມ້ຽວເຈິ້ນຫວຸ (Miao Zhenwu), ເນື່ອງຈາກການປັບ ປ່ຽນ ວຽກງານຈຶ່ງເຮັດໃຫ້ບໍ່ສາມາດປະຕິບັດໜ້າທີ່ຂອງອຳນວຍການຝ່າຍປະຕິບັດການໄດ້ (COO) ແລະ ແຕ່ງຕັ້ງ ທ່ານ ຊູໂປ (Xu Bo) ຮັບຕຳແໜ່ງອຳນວຍການຝ່າຍປະຕິບັດການ (COO) ແທນ. ພ້ອມທັງແຕ່ງຕັ້ງ ທ່ານ ເຫຼີ ຢ້າວຫາຍ (Lei Yaohai) ເປັນເລຂານຸການສະພາບໍລິຫານຂອງບໍລິສັດ ເຊິ່ງໄດ້ມີການອະນຸມັດຈາກກອງປະຊຸມສະພາບໍລິຫານຂອງ ບໍລິສັດ. ອາຍຸການດຳລົງຕຳແໜ່ງແມ່ນສອດຄ່ອງກັບອາຍຸການຂອງ
ສະພາບໍລິຫານສະໄໝປະຈຸບັນ.

ຫຼັງຈາກປະທານກອງປະຊຸມລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນ, ຕາງໜ້າຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານການແຕ່ງຕັ້ງຄະນະອຳນວຍການ ແລະ ເລຂານຸການສະພາບໍລິຫານຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ວາລະ ຄັ້ງທີ 1 ປະຈຳປີ 2019 ແມ່ນລາຍງານໃຫ້ຜູ້ຖືຮຸ້ນ ຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາຕື່ມ, ປະທານຈຶ່ງກ່າວປິດກອງປະຊຸມໃນເວລາ 17:00 ໂມງ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Li XiaoDong
(ທ່ານ ຫຼີ ສ່ຽວຕົ໋ງ)
ປະທານກອງປະຊຸມ

ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, LAO PDR, Tel & Fax: (+856) 21 228299

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ລາຍງານຄືນໃໝ່ ກີບ
ລາຍຮັບ	4	10,003,956,689	10,778,100,578
ລາຍຮັບອື່ນໆຈາກການດຳເນີນງານ		2,645,856,039	3,359,677,717
ລາຍຮັບລວມ		**12,649,812,728**	**14,137,778,295**
ລາຍຈ່າຍຈາກການດຳເນີນງານ	5	(998,293,517)	(2,530,903,660)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ	10	522,700,000	4,443,100,000
ກຳໄລຈາກການດຳເນີນງານ		**12,174,219,211**	**16,049,974,635**
ລາຍຮັບທາງການເງິນ		187,809,544	20,857,825
ລາຍຈ່າຍທາງການເງິນ		(2,279,361,633)	(1,766,706,425)
ກຳໄລກ່ອນອາກອນ		**10,082,667,122**	**14,304,126,035**
ລາຍຈ່າຍອາກອນກຳໄລ	6	(2,348,785,463)	(3,432,990,249)
ກຳໄລພາຍໃນປີ		**7,733,881,659**	**10,871,135,786**
ລາຍຮັບອື່ນໆນອກການທຸລະກິດພາຍໃນປີ, ອາກອນສຸດທິ		-	-
ລວມລາຍຮັບນອກການທຸລະກິດພາຍໃນປີ, ອາກອນສຸດທິ		**7,733,881,659**	**10,871,135,786**
ກຳໄລຕໍ່ຮຸ້ນ			
- *ພື້ນຖານກຳໄລພາຍໃນປີຂອງຜູ້ຖືຮຸ້ນສາມັນ*	18	*61.23*	*113.24*

ກະກຽມໂດຍ:

ທ່ານ ຊິນເຝີຍ ຫຼ້
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ໋ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

18 ພຶດສະພາ 2020

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	31 ທັນວາ 2019 ກີບ	31 ທັນວາ 2018 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	7	38,655,476,969	4,144,271,082
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	8	13,207,235,168	8,796,019,145
ຈ່າຍລ່ວງໜ້າສຳລັບຊື້ຊັບສິນຄົງທີ່	9	23,400,000,000	-
ລວມຊັບສິນໝຸນວຽນ		**75,262,712,137**	**12,940,290,227**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ	10	165,197,500,000	164,674,800,000
ລວມຊັບສິນບໍ່ໝຸນວຽນ		**165,197,500,000**	**164,674,800,000**
ລວມຊັບສິນ		**240,460,212,137**	**177,615,090,227**

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2019

	ບົດອະທິບາຍເລກທີ	31 ທັນວາ 2019 ກີບ	31 ທັນວາ 2018 ກີບ
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	3,929,632,436	2,827,996,983
ລວມໜີ້ສິນໝຸນວຽນ		**3,929,632,436**	**2,827,996,983**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	11	64,232,500,000	64,232,500,000
ໜີ້ຕ້ອງສົ່ງອາກອນລໍຖ້າຊຳລະສະສາງ	6	4,773,943,187	3,152,429,037
ລວມໜີ້ສິນບໍ່ໝຸນວຽນ		**69,006,443,187**	**67,384,929,037**
ລວມໜີ້ສິນ		**72,936,075,623**	**70,212,926,020**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	13	147,199,900,000	96,000,000,000
ສ່ວນເກີນມູນຄ່າຮຸ້ນ		2,559,995,000	-
ຄັງແຮຕາມລະບຽບການ		1,776,424,152	1,140,216,421
ຄັງແຮເຜື່ອຂະຫຍາຍທຸລະກິດ		1,776,424,152	1,140,216,421
ກຳໄລສະສົມ		14,211,393,210	9,121,731,365
ລວມທຶນ		**167,524,136,514**	**107,402,164,207**
ລວມໜີ້ສິນ ແລະ ທຶນ		**240,460,212,137**	**177,615,090,227**

ກະກຽມໂດຍ:

ທ່ານ ຊິນເຜີຍ ຫູ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕິງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ
18 ພຶດສະພາ 2020

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2019

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ	ສ່ວນເກີນມູນຄ່າຮຸ້ນ	ຄັງແຮຕາມລະບຽບການ	ຄັງແຮເພື່ອຂະຫຍາຍທຸລະກິດ	ກຳໄລສະສົມ	ລວມທັງໝົດ
	ກີບ	ກີບ	ກີບ	ກີບ	ກີບ	ກີບ
ຍອດເຫຼືອນະວັນທີ 1 ມັງກອນ 2018	**96,000,000,000**	**-**	**53,102,842**	**53,102,842**	**424,822,737**	**96,531,028,421**
ກຳໄລສຸດທິຂອງໃນໄລຍະ	-	-	-	-	10,871,135,786	10,871,135,786
ຈັດສັນກຳໄລເຂົ້າຄັງແຮ	-	-	1,087,113,579	1,087,113,579	(2,174,227,158)	-
ຍອດເຫຼືອໃນວັນທີ 31 ທັນວາ 2018	**96,000,000,000**	**-**	**1,140,216,421**	**1,140,216,421**	**9,121,731,365**	**107,402,164,207**
ຍອດເຫຼືອນະວັນທີ 1 ມັງກອນ 2019	**96,000,000,000**	**-**	**1,140,216,421**	**1,140,216,421**	**9,121,731,365**	**107,402,164,207**
ຮຸ້ນອອກຈຳໜ່າຍ	51,199,900,000	2,559,995,000	-	-	-	53,759,895,000
ການດັດແກ້ອາກອນໃນປີທີ່ຜ່ານມາ	-	-	(137,180,435)	(137,180,435)	(1,097,443,482)	(1,371,804,352)
ກຳໄລສຸດທິຂອງໃນປີ	-	-	-	-	7,733,881,659	7,733,881,659
ຈັດສັນກຳໄລເຂົ້າຄັງແຮ	-	-	773,388,166	773,388,166	(1,546,776,332)	-
ຍອດເຫຼືອໃນວັນທີ 31 ທັນວາ 2019	**147,199,900,000**	**2,559,995,000**	**1,776,424,152**	**1,776,424,152**	**14,211,393,210**	**167,524,136,514**

ກະກຽມໂດຍ:

ທ່ານ ຊິນເຝີຍ ຫຸ້ ຫ
ຜູ້ຈັດການຝ່າຍການເງິນ
ນະຄອນຫຼວງວຽງຈັນ, ສປປ ລາວ
18 ພຶດສະພາ 2020

ອະນຸມັດໂດຍ:

ທ່ານ ຫຼີ ສຽວຕົ໋ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019

	ບົດອະທິບາຍ ເລກທີ	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019 ກີບ	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**10,082,667,122**	**14,304,126,035**
ການດັດແກ້ສຳລັບ:			
ກຳໄລຈາກການຕີມູນຄ່າໃນຊັບສິນເພື່ອການລົງທຶນ	10	(522,700,000)	(4,443,100,000)
ລາຍຈ່າຍດອກເບ້ຍ		2,279,361,633	1,766,706,425
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**11,839,328,755**	**11,627,732,460**
ການເພີ່ມຂຶ້ນຂອງໜີ້ຕ້ອງຮັບ		(30,090,577,654)	(9,593,965,855)
ການເພີ່ມຂຶ້ນຂອງໜີ້ຕ້ອງສົ່ງ		241,260,360	2,220,278,280
ອາກອນກຳໄລທີ່ຈ່າຍແລ້ວ		(1,238,700,574)	(120,000,000)
ກະແສເງິນສົດສຸດທິ (ໃຊ້ໄປ)/ຈາກ ກິດຈະກຳການດຳເນີນງານ		**(19,248,689,113)**	**4,134,044,885**
ກິດຈະກຳການລົງທຶນ			
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		-	-
ກິດຈະກຳທາງການເງິນ			
ລາຍຮັບຈາກການອອກຮຸ້ນທຶນ			
– ມູນຄ່າໜ້າໃບ		51,199,900,000	-
ສ່ວນເກີນມູນຄ່າຮຸ້ນ		2,559,995,000	-
ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ		**53,759,895,000**	-
ເງິນສົດເພີ່ມຂຶ້ນສຸດທິພາຍໃນປີ		**34,511,205,887**	**4,134,044,885**
ເງິນສົດໃນຕົ້ນປີ		**4,144,271,082**	**10,226,197**
ເງິນສົດໃນທ້າຍປີ	7	**38,655,476,969**	**4,144,271,082**

ກະກຽມໂດຍ:

ທ່ານ ຊິນເຜີຍ ຫຸ
ຜູ້ຈັດການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫຼີ ສ່ຽວຕົ້ງ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ
18 ເມສະ 2020

4. ລາຍຮັບ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ລາຍງານຄືນໃໝ່*
	ກີບ	*ກີບ*
ລາຍຮັບຈາກສັນຍາການຮ່ວມມື (*)	2,389,832,351	2,798,578,770
ລາຍຮັບຈາກການເຊົ່າ	7,614,124,338	7,979,521,808
	10,003,956,689	**10,778,100,578**

(*) ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແພລັທນຳ ຊິເນເພລັກ (ລາວ) ຈຳກັດ (ເມເຈີ), ບໍລິສັດ ໄດ້ໃຫ້ເຊົ່າໃນໄລຍະເວລາ 20 ປີ ນັບແຕ່ ວັນທີ 7 ສິງຫາ 2015 ເຖິງ ວັນທີ 6 ສິງຫາ 2035 ໃນສ່ວນຂອງຊັບສິນເພື່ອການລົງທຶນເຂົ້າໃນການດຳເນີນງານທາງດ້ານໂຮງໜັງຮ່ວມກັນກັບເມເຈີ. ລາຍຮັບຈາກການດຳເນີນງານຂອງໂຮງໜັງ ແມ່ນແບ່ງກັນລະຫວ່າງບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ຕາມການກຳນົດໄວ້ໃນສັນຍາ.

5. ລາຍຈ່າຍການດຳເນີນງານ

	ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2019	*ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018 ລາຍງານຄືນໃໝ່*
	ກີບ	*ກີບ*
ລາຍຈ່າຍໃຫ້ພະນັກງານ	385,210,860	385,581,000
ອື່ນໆ	613,082,657	2,145,322,660
	998,293,517	**2,530,903,660**

6. ອາກອນ

ປີຜ່ານມາບໍລິສັດຕ້ອງໄດ້ຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນອາກອນໂດຍອີງຕາມກົດໝາຍສ່ວຍສາອາກອນ ເລກທີ70/ສພຊ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016.

ບໍລິສັດໄດ້ຖືກຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບລາວ ຕັ້ງແຕ່ວັນທີ 31 ພຶດສະພາ 2019 ໂດຍອີງຕາມແຈ້ງການສະບັບເລກທີ 2618/ພສ, ລົງວັນທີ 04 ມິຖຸນາ 2018 ຈາກກະຊວງການເງິນ, ບໍລິສັດໄດ້ຮັບອະນຸຍາດຫຼຸດອາກອນກຳໄລ 5% ຈາກອັດຕາປົກກະຕິເປັນຄັ້ງທຳອິດ 5 ປີ ແຕ່ປີ 2019 ເຖິງປີ 2023. ອີງຕາມອາກອນລາຍຮັບທີ່ຕ້ອງເສຍອາກອນຂອງບໍລິສັດ ສຳລັບໄລຍະນີ້ຈະແມ່ນໃນອັດຕາ 19%.

ເອກະສານຄັດຕິດ 4

ບົດລາຍງານການດຳເນີນທຸລະກິດປະຈຳປີ 2019 ແລະ ແຜນການດຳເນີນທຸລະກິດປີ 2020 ຂອງ ວຈຊຕ

ສາລະບານ

1. ແນະນຳບໍລິສັດ

2. ວິໄສທັດ ແລະ ພາລະກິດ

2.1 ວິໄສທັດ

2.2 ພາລະກິດ

3. ໂຄງຮ່າງການຈັດຕັ້ງ

4. ຜົນການດຳເນີນທຸລະກິດ

4.1 ລາຍໄດ້

4.2 ກຳໄລ ແລະ ຂາດທຶນ

4.3 ຊັບສິນທັ້ງໝົດ

4.4 ໜີ້ສິນທັ້ງໝົດ

4.5 ການມອບພັນທະພາສີອາກອນ

5. ວຽກງານສົ່ງເສີມການພັດທະນາທຸລະກິດ

6. ວຽກທີ່ກ່ຽວຂ້ອງຂອງຄະນະກຳມະການ

7. ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ

8. ແຜນການດຳເນີນທຸລະກິດປະຈຳປີ 2020

1. ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕ່ອນເໜືອ ຈາກັດທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດ ກໍ່ສ້າງ ລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈາກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ "VCL"), ທຶນຈົດທະບຽນໃນປະຈຸບັນແມ່ນ 147,199,900,000 ກີບ.

ກິດຈະການຫຼັກຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັນເຕີ ແລະ ຫ້ອງເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ.

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງ ເຊັ່ນທະນາຄານແຫ່ງ ສປ ຈີນ, ຮ້ານກາເຟ ອາເມຊອນ, ຮ້ານມິນິໂຊ, ຮ້ານກະແລ້ມ DQ, ແລະວິສາຫະກິດຕ່າງປະເທດຂະຫນາດໃຫຍ່ ເຊັ່ນບໍລິສັດລິດໄຟລາວຈີນ, ບໍລິສັດໄຟຟ້າເກົ່າຫລີ, ບໍລິສັດ ປະກັນໄພພຣຸເດັນໂຊ ໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານສຳນັກງານຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊັນເຕີ ໄດ້ສ້າງເປັນສູນກາງການຄ້າ ສູນກາງສຳນັກງານ ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕົວແບບການຮ່ວມມືຂອງລັດຖະບານສອງຊາດລາວ ຈີນ.

2. ວິໄສທັດ ແລະ ພາລະກິດ

2.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງ, ສູນກາງການບໍລິການຂອງປະເທດລາວ.

2.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

3. ໂຄງຮ່າງການຈັດຕັ້ງ

3.1 ໂຄງຮ່າງການຈັດຕັ້ງ ອຈຊຕ: ປະກອບດ້ວຍສະມາຊິກສະພາບໍລິຫານ 11 ທ່ານ, ໃນນັ້ນປະກອບມີ ຜູ້ອຳນວຍການ.

3.2 ສະພາບໍລິຫານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສະໄໝທີ່ 1 ປະກອບດ້ວຍ 11 ທ່ານ:

- ທ່ານ ເວີຍ ຫວາ (Mr. Wei Hua) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ
- ທ່ານ ຫຼີ ສ່ຽວຕົງ (Mr. Li Xiaodong) ເປັນສະມາຊິກ, ຜູ້ອຳນວຍການໃຫຍ່
- ທ່ານ ຫຼົວ ກວາງຊ້ານ (Mr. Liu Guangcan) ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
- ທ່ານ ສາຍ ຈ້ຽນຫົງ (Mr. Chai Jianhong) ເປັນສະມາຊິກ
- ທ່ານ ບຸລະພາ ສັນຕິຄົງຄາ ເປັນສະມາຊິກ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ
- ທ່ານ ນາງ ເຕີ້ງ ຢູ່ (Ms. Deng Yu) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຈໍຊິ່ງ ບິວສີເນ່ັງມາ ເປັນສະມາຊິກອິດສະຫຼະ

4. ຜົນການດຳເນີນທຸລະກິດ

4.1 ລາຍຮັບ

ໃນປີ 2019, ລາຍໄດ້ຈາກການດຳເນີນທຸລະກິດປະຈຳປີຂອງບໍລິສັດແມ່ນເປັນເງິນ 12,649,812,728 ກີບ. ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 3,888,241,086.47 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຫ້ອງການ ແມ່ນເປັນເງິນ 3,725,882,684.53 ກີບ, ລາຍໄດ້ຈາກການຮ່ວມທຸລະກິດ ແມ່ນເປັນເງິນ 2,389,832,918 ກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຈັດງານ ແມ່ນເປັນເງິນ 1,623,211,046.48 ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍ

ໂຄສະນາ ແມ່ນເປັນເງິນ 1,022,644,992.48 ກີບ. ເຫດຜົນທີ່ລາຍຮັບຫຼຸດລົງຈາກແຜນຄາດຄະເນ ແມ່ນຍ້ອນມີການ ປັບປ່ຽນວິທີການຮັບຮູ້ລາຍໄດ້ຂອງບໍລິສັດ ຊຶ່ງລາຍລະອຽດແມ່ນໄດ້ລະບຸໄວ້ໃນເອກະສານລາຍງານການເງິນ 2019.

4.2 ກຳໄລ - ຂາດທຶນ

ໃນປີ 2019, ກຳໄລກ່ອນອາກອນທັງໝົດຂອງບໍລິສັດ ແມ່ນເປັນເງິນ 10,082,667,122 ກີບ, ມີການຫຼຸດລົງ 29.51% ຈາກປີທີ່ແລ້ວ. ກຳໄລສຸດທິແມ່ນເປັນເງິນ 7,733,881,659 ກີບ. ສາເຫັດໃນການຫຼຸດລົງ ແມ່ນຍ້ອນວ່າໄລຮັບ ຈາກການປ່ຽນແປງຂອງມູນຄ່າຍຸດຕິທຳແຫ່ງການລົງທຶນຂອງຂະແໜງອະສັງຫາລິມະຊັບ, ມູນຄ່າຍຸດຕິທຳຂອງປີ 2019 ແມ່ນປະມານ 500 (ຫ້າຮ້ອຍ) ລ້ານກີບ, ຂອງປີ 2018 ແມ່ນປະມານ 4.4 (ສີ່ຈຸດສີ່)ຕື້ກີບ.

4.3 ລວມຊັບສິນ

ໃນປີ 2019, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 240,460,212,137 ກີບ ເຊິ່ງເປັນການເພີ່ມຂຶ້ນ 35% ຈາກປີທີ່ແລ້ວ. ເຫດຜົນທີ່ຊັບສິນເພີ່ມຂຶ້ນ ແມ່ນຍ້ອນວ່າບໍລິສັດລະດົມທຶນໄດ້ປະມານ 53.8 (ຫ້າສິບສາມຈຸດແປັດ)ຕື້ກີບ ໂດຍຜ່ານການອອກຈຳໜ່າຍຮຸ້ນ ໃນເດືອນ 5 ປີ 2019.

4.4 ລວມໜີ້ສິນ

ໃນປີ 2019, ໜີ້ສິນທັງໝົດຂອງບໍລິສັດ ແມ່ນເງິນ 72,936,075,623 ກີບ ເຊິ່ງເປັນການເພີ່ມຂຶ້ນ 4% ຈາກປີທີ່ ແລ້ວ. ເຫດຜົນຂອງໜີ້ສິນເພີ່ມຂຶ້ນ ແມ່ນຍ້ອນວ່າມີດອກເບ້ຍເກີດມາຈາກການກູ້ຢືມເງິນ ລະຫວ່າງບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈຳກັດ.

4.5 ການມອບພັນທະອາກອນ

ໃນປີ 2019, ການມອບພັນທະອາກອນປະຈຳປີທັງໝົດຂອງບໍລິສັດແມ່ນເປັນເງິນ 2,768,340,813 ກີບ, ໃນນັ້ນ ອາກອນກຳໄລເປັນເງິນ 1,284,606,370 ກີບ, ອາກອນມູນຄ່າເພີ່ມເປັນເງິນ 1,469,330,443 ກີບ, ອາກອນເງິນເດືອນ ເປັນເງິນ 14,404,000 ກີບ.

5. ວຽກງານສົ່ງເສີມການພັດທະນາທຸລະກິດ

ອີງຕາມບົດລາຍງານຂອງທະນາຄານໂລກໃນປີ **2019,** ລວມຍອດຜະລິດຕະພັນພາຍໃນ (**GDP**) ຂອງລາວແມ່ນ ປະມານ **20,2** ຕື້ໂດລາສະຫະລັດ, ແລະຈັງຫວະການເຕີບໂຕຂອງ **GDP** ໄດ້ຊ້າລົງໜ້ອຍໜຶ່ງ, ຕາມການຄາດຄະເນ **6,2%.** ສຳລັບທຸລະກິດອະສັງຫາລິມະສັບໃນນະຄອນຫລວງວຽງຈັນ, ປະເທດລາວ ກໍຄືການຄ້າຂາຍເຄື່ອງຍ່ອຍໃນສູນ ການຄ້າ ແລະ ທຸລະກິດອາຄານສຳນັກງານໃຫ້ເຊົ່າ ກໍນັບມື້ນັບມີການແຂ່ງຂັນກັນຫລາຍຂຶ້ນ. ນອກເໜືອຈາກການແຂ່ງຂັນ

ທຸລະກິດແບບດັ້ງເດີມ ເຊັ່ນຕະຫຼາດເຊົ້າ ແລະ ITECC ແລ້ວ, ຍັງມີສູນການຄ້າເວີເຫຼດເຊັນເຕີ, Parkson ກໍໄດ້ເປີດຕົວ ແລະ ເລີ່ມດຶງດູດການລົງທຶນຢ່າງຮອບດ້ານໃນປີ 2019. ທຸລະກິດອາຄານສຳນັກງານໃຫ້ເຊົ່າເຊັ່ນ: ໂຄງການ Crowne Plaza ໄດ້ຮັກສາອັດຕາການໃຫ້ເຊົ່າທີ່ໝັ້ນຄົງ, ແລະ ອາຄານສຳນັກງານ Guanxin International ກໍ່ຈະເປີດບໍລິການໃນປີ 2020.

ຕະຫຼອດປີ 2019, ສູນການຄ້າວຽງຈັນເຊັນເຕີໄດ້ຈັດກິດຈະກຳທັງໝົດ 142 ກິດຈະກຳ ເຊັ່ນ: ການປະກວດ MISS LAO ປີ 2019 ຮອບ 40 ຄົນສຸດທ້າຍ, ງານເປີດຕົວຂອງບໍລິສັດ Food Panda, ການສະເຫຼີມສະຫຼອງວັນຄົບຮອບ 100 ປີຂອງການສ້າງຕັ້ງອົງການແຮງງານສາກົນ ILO, ແລະງານວາງສະແດງສິ້ນຄ້າໜຶ່ງເມືອງໜຶ່ງສິນຄ້າຈາກປະເທດໄທ. ງານວາງສະແດງເພື່ອສົ່ງເສີມການອ່ານປຶ້ມວຽງຈັນ, ເທດສະການອາຫານມາເລເຊຍ, ເທດສະການອາຫານເກົາຫຼີ, UN ວັນປົດປ່ອຍປະເທດລາວ, ເທດສະການວັດທະນະທຳອິນໂດເນເຊຍ ແລະ ຍີ່ປຸ່ນ, ແລະກິດຈະກຳອື່ນໆທີ່ສູນການຄ້າວຽງຈັນເຊັນເຕີເປັນຜູ້ຈັດງານ ເພື່ອການສື່ສານທາງການຄ້າ ແລະ ວັດທະນະທຳໃຫ້ປະຊາຊົນ, ໃນນັ້ນ ມີການຈັດກິດຈະກຳ 24 ກິດຈະກຳ ໄດ້ສ້າງຄວາມນິຍົມໂດຍລວມ ເຮັດໃຫ້ມີການສົ່ງເສີມບັນຍາກາດດ້ານການຄ້າໃນທາງບວກທີ່ດີຂຶ້ນ. ກ່ຽວກັບທຸລະກິດອາຄານສຳນັກງານ, ວຈຊຕ ພະຍາຍາມສ້າງການປະສານງານ ແລະ ການພັດທະນາແບບປະສົມປະສານກັບສູນການຄ້າ ເພື່ອເປັນບ່ອນອຳນວຍຄວາມສະດວກ, ໂດຍມີຫ້ອງຊັບພະສິນຄ້າເປັນປະໂຫຍດໃຫ້ແກ່ທຸລະກິດອາຄານສຳນັ ງານ, ແລະ ພະນັກງານທີ່ເຮັດວຽກຢູ່ສຳນັກງານຈຳນວນຫຼາຍກໍໄດ້ກາຍເປັນຜູ້ບໍລິໂພກຫຼັກຂອງສູນການຄ້າວຽງຈັນເຊັນເຕ. ປີ 2019, ມີ 8 ບໍລິສັດໄດ້ມາຕັ້ງຫ້ອງການຢູ່ໃນອາຄານສຳນັກງານວຽງຈັນເຊັນເຕ, ອັດຕາການໃຫ້ເຊົ່າແລ້ວແມ່ນ 79%. ບົນພື້ນຖານການຮັກສາຈຳນວນບໍລິສັດທີ່ໄດ້ເຊົ່າພື້ນທີ່ຫ້ອງການ, ບໍລິສັດ ຈະພະຍາຍາມຊອກຫາບໍລິສັດໃໝ່ເຂົ້າມາຕັ້ງສຳນັກງານ ເພື່ອເພີ່ມລາຍໄດ້ຂອງບໍລິສັດຕື່ມອີກ.





6. ວຽກທີ່ກ່ຽວຂ້ອງຂອງຄະນະກຳມະການ

6.1 ຫລັງຈາກໄດ້ຈົດທະບຽນໃນເດືອນພຶດສະພາ **2019** ແລ້ວ, ສະພາບໍລິຫານໄດ້ມີການຈັດກອງປະຊຸມທັງໝົດ **3** ຄັ້ງ, ໃນນັ້ນມີ **2** ກອງປະຊຸມສະພາບໍລິຫານ ແລະ **1** ກອງປະຊຸມວິສາມັນຜູ້ຖືຮຸ້ນ.

6.2 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນໄດ້ຈັດກອງປະຊຸມທັງໝົດ **1** ຄັ້ງ, ກອງປະຊຸມໄດ້ມີການພິຈາລະນາ**ແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ**, ແລ້ວປະກອບບົດລາຍງານໃຫ້ສະພາບໍລິຫານ ເພື່ອສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານ ພິຈາລະນາ ແລະ ຕັດສິນໃນກອງປະຊຸມ.

6.3 ອີງຕາມຂໍ້ກຳນົດຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ສະມາຊິກຄະນະກຳມະການຂອງສະພາບໍລິຫານແຕ່ລະຄະນະ ຕ້ອງເປັນສະມາຊິກສະພາບໍລິຫານ. ຄະນະກຳມະການຄັດເລືອກ ໄດ້ດຳເນີນການຄັດເລືອກສະມາຊິກຄະນະກຳມະການ ເຊັ່ນຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ, ຄະນະກຳມະການກຳນົດຄ່າຕອບແທນ ແລະ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ, ແລ້ວປະກອບບົດລາຍງານການຄັດເລືອກ ເພື່ອສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານ ພິຈາລະນາ ແລະ ຕັດສິນໃນກອງປະຊຸມ.

6.4 ອີງໃສ່ແຜນການດຳເນີນວຽກງານ, ຄະນະກຳມະການກວດສອບໄດ້ກວດກາບົດລາຍງານການເງິນຂອງບໍລິສັດ ເຊິ່ງມີບົດລາຍງານການເງິນຫົກເດືອນຕົ້ນປີ, ໄຕມາດ 3 ແລະ ປະຈຳປີ ເພື່ອຮັບປະກັນຄວາມຖືກຕ້ອງຂອງບົດລາຍງານການເງິນດັ່ງກ່າວ.

7. ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ

ໃນປີ 2019, ໄພນ້ຳຖ້ວມຮ້າຍແຮງໄດ້ເກີດຂຶ້ນຢູ່ພາກເໜືອ ແລະ ພາກໃຕ້ຂອງປະເທດລາວ, ບໍລິສັດໄດ້ຕອບສະ

ໝອງຕາມການຮຽກຮ້ອງຂອງລັດຖະບານລາວ ແລະ ໄດ້ຈັດຕັ້ງບັນດາມັກທຸລະກິດ ແລະ ພະນັກງານຢ່າງຈິງຈັງເພື່ອ ບໍລິຈາກອັດສະດຸຕ່າງໆໃຫ້ແກ່ປະເທດລາວ, ອາຫານແຫ້ງ ແລະ ເຄື່ອງບັນເທົາທຸກອື່ນໆທີ່ລະດົມໄດ້ ໄດ້ຖືກສົ່ງໄປເຂດ ປະສົບໄພພິບັດ; ບໍລິສັດຍັງໄດ້ນຳພາຕົວຢ່າງ ໃນການຕອບສະໜອງຕໍ່ການຮຽກຮ້ອງຂອງກະຊວງສະຫວັດດີການສັງຄົມ ລາວ, ໄດ້ບໍລິຈາກເງິນຈຳນວນ 20 ລ້ານກີບ ໃຫ້ເຂດປະສົບໄພ ເພື່ອໃຫ້ມີປະກອບສ່ວນໃນການສ້າງສາເຂດປະສົບ ໄພພິບັດ.



8. ແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2020

8.1 ປະຕິບັດຕາມແຜນການນຳໃຊ້ທຶນທີ່ລະດົມໄດ້, ກະກຽມວຽກງານທີ່ກ່ຽວຂ້ອງສຳລັບການຮັບຊື້ຊັບສິນ, ຫຼັງ ຈາກໄດ້ມີການອະນຸມັດຕາມລະບຽບກົດໝາຍກ່ຽວຂ້ອງແລ້ວ ໃຫ້ປະຕິບັດຕາມມະຕິ;

8.2 ສຳລັບວຽກງານສູນການຄ້າໃນປີ 2020, (1) ສືບຕໍ່ເພີ່ມທະວີການຊອກຫາ ດຶງດູດຍີ່ຫໍ້ສາກົນເຂົ້າມາຈຳໜ່າຍຢູ່ ສູນການຄ້າ,ເພີ່ມທະວີການຮ່ວມມືກັບບັນດາຍີ່ຫໍ້ດັ້ງຂອງທ້ອງຖິ່ນໃນລາວ, ສ້າງຊ່ອງທາງການຕິດຕໍ່ພົວພັນກັບບັນດາຍີ່ຫໍ້ທີ່ ມີຊື່ສຽງຢູ່ຕ່າງປະເທດ; (2) ສຸມໃສ່ວຽກງານການໃຫ້ເຊົ່າພື້ນທີຈັດງານ ແລະ ໂຄສະນາໃນດ້ານທຸລະກິດ ແລະ ກິດຈະກາ ອັດທະນະທຳ ທີ່ເປັນຮູບແບບໃໝ່ທີ່ມີຫົວຄິດປະດິດສ້າງ ແລະ ມີອິດທິພົນຫລາຍຂຶ້ນ,ເພີ່ມທະວີການຮ່ວມມືກັບບັນດາວິ ສາຫະກິດທີ່ມີຊື່ສຽງໃນລາວ, ແລະ ສຸມໃສ່ທຸລະກິດຮູບແບບຕ່າງໆເຊັ່ນ: ການວາງສະແດງສິນຄ້າທີ່ມີຊື່ສຽງ; (3) ລິເລີ່ມ ເປີດການຊື້ຂາຍສິນຄ້າໂດຍຜ່ານຊ່ອງທາງການຄ້າອອນໄລນ໌ທາງເຟສບຸກ, ປີນີ້ຈະສືບຕໍ່ລົງເລິກການດຳເນີນງານຂອງການຊື້ ຂາຍສິນຄ້າອອນໄລນ໌, ປັບປຸງຜະລິດຕະພັນ ຍີ່ຫໍ້ໃນສູນການຄ້າອອນໄລນ໌, ແລະ ສ້າງຕັ້ງຮູບແບບທຸລະກິດທີ່ມີການສົມທົບ ອອນໄລນ໌ ແລະ ອອບໄລນ໌ ກໍຄືທຸລະກິດ O 2 O.

8.3 ສຳລັບວຽກງານອາຄານສຳນັກງານ, ໜຶ່ງແມ່ນສືບຕໍ່ເພີ່ມທະວີການຊອກຫາ ດຶງດູດວິສາຫະກິດມາເຊົ່າພື້ນທີ ຫ້ອງການ, ພະຍາຍາມໃຫ້ມີການເຊົ່າໂດຍບໍ່ມີຫ້ອງຫວ່າງລົງ; ສອງແມ່ນສືບຕໍ່ຊຸກຍູ້ການພັດທະນາໄປຄຽງຄູ່ກັນລະຫວ່າງ ສູນການຄ້າ ແລະ ອາຄານສຳນັກງານ ແລະ ພະຍາຍາມນຳຜູ້ບໍລິໂພກທີ່ເປັນພະນັກງານເຮັດວຽກຢູ່ອາຄານສຳນັກງານ ໄປ ຈັບຈ່າຍໃຊ້ສອຍຢູ່ສູນການຄ້າ.

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ



ເອກະສານຄັດຕິດ 5

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ນາງ ໂຈວ ເຫຼີ່ຍ (Ms. Zhou Lei)
ສັນຊາດ:	ຈີນ
ວັນເກີດ:	15 /06/1977
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລເສຊວນ, ສາຂາບໍລິຫານວິສະວັດກໍ່ສ້າງ.

- ປະສົບການເຮັດວຽກ:

- 1996-2007, ວິຊາການໂຄງການຊອງຫົກຂອງບໍລິສັດ ວິສະວະກໍ່ສ້າງເລກ 4 ແຂວງຢຸນນານ
- 2007-2010, ຫົວໜ້າໜ່ວຍງານວິຊາການໂຄງການຊອງຫົກຂອງບໍລິສັດວິສະວະກໍ່ສ້າງເລກ 4 ແຂວງຢຸນ ນານ
- 2010-2012, ຮອງຫົວໜ້າພະແນກກໍ່ສ້າງຕ່າງປະເທດບໍລິສັດວິສະວະກໍ່ສ້າງເລກ 4 ແຂວງຢຸນນານ
- 2012-2014, ເລຂາຄະນະພັກຂອງພະແນກກໍ່ສ້າງຕ່າງປະເທດບໍລິສັດວິສະວະກໍ່ສ້າງເລກ 4 ແຂວງຢຸນນານ
- 2014-2015, ຮອງອຳນວຍການຝ່າຍເສດຖະສາດບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ
- 2015-2016, ອຳນວຍການຝ່າຍເສດຖະສາດ ສະມາຊິກໜ່ວຍງານພັກບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນ ນານຈຳກັດ
- 2016 ເຖິງ ປະຈຸບັນ, ອຳນວຍການຝ່າຍເສດຖະສາດ ສະມາຊິກຄະນະພັກບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນ ນານຈຳກັດ

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ນາງ ອໍລະໄທ ສັນຕິຖິງຄາ
ສັນຊາດ:	ລາວ
ວັນເກີດ:	21/01/1979
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2008 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ ບໍລິສັດ ກຣີດຕະພິງ ກຣຸບ ຈຳກັດ.
- 2010 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
- 2014 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ໂຮງແຮມ ແລນມາກ ລິເວີໄຊ
- 2017 ເຖິງ ປະຈຸບັນ, ຮອງປະທານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: ທ່ານ ຫຼີ ສ່ຽວຕົ໋ງ (Mr. Li Xiaodong)

ສັນຊາດ: ຈີນ

ວັນເກີດ: 24/12/1985

ສະຖານທີ່ເກີດ: ແຂວງສ້ານຊີ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ຮຽນຢູ່ມະຫາວິທະຍາໄລອູຫ້ານຫຼີ້ກົ່ງ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2008-2011, ວິຊາການບໍລິສັດ ວິສະວະກຳກໍ່ສ້າງຢຸນນານ
- 2011 - 2015, ຫົວໜ້າຫ້ອງການ ເລຂານຸການສະພາບໍລິຫານ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
- 2013-2016, ຜູ້ຊ່ວຍອຳນວຍການບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ.
- 2015-2016, ຮອງອຳນວຍການບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
- 2016 ເຖິງ ປະຈຸບັນ, ຮອງອຳນວຍການບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ.
- 2016 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
- 2016 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ເວີຍ ຫວາ (Mr. Wei Hua)
ສັນຊາດ:	ຈີນ
ວັນເກີດ:	10/12/1974
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນຊຽງໄຫ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 1995-2003, ເຮັດວຽກຢູ່ບໍລິສັດວິສະວະກຳກໍ່ສ້າງເລກ 6 ແຂວງຢູນນານຈຳກັດ.
- 2003-2004, ເຮັດວຽກຢູ່ບໍລິສັດວິສະວະກາກໍ່ສ້າງເລກ 2 ແຂວງຢູນນານຈາກັດ.
- 2004-2007, ປະທານກຳມະບານບໍລິສັດວິສະວະກຳກໍ່ສ້າງທີ 2 ແຂວງຢູນນານຈຳກັດ.
- 2008-2009, ຜູ້ຊ່ວຍອຳນວຍການບໍລິສັດວິສະວະກຳກໍ່ສ້າງເລກ 2 ແຂວງຢູນນານຈຳກັດ.
- 2009-2010, ຮອງອຳນວຍການບໍລິສັດວິສະວະກຳກໍ່ສ້າງເລກ 2 ແຂວງຢູນນານຈຳກັດ.
- 2011-2012, ອຳນວຍການໃຫຍ່ ບໍລິສັດວິສະວະກຳກໍ່ສ້າງເລກ 5 ແຂວງຢູນນານຈຳກັດ.
- 2012-2015, ປະທານບໍລິຫານ ບໍລິສັດໂຄງສ້າງເຫຼັກຢູນນານຈຳກັດ.
- 2015-2016, ຜູ້ຊ່ວຍອຳນວຍການບໍລິສັດວິສະວະກຳກໍ່ສ້າງຢູນນານກຣຸບຈຳກັດ ແລະ ຮອງປະທານບໍລິສັດ ລົງທຶນກໍ່ສ້າງຕົວເມືອງແຂວງຢູນນານຈຳກັດ.
- 2016-2017, ຜູ້ຊ່ວຍອຳນວຍການບໍລິສັດ ລົງທຶນ ກໍ່ສ້າງ ແລະ ຖືຮຸ້ນ ແຂວງຢູນນານກຣຸບຈຳກັດ; ຮອງປະທານ ບໍລິສັດລົງທຶນກໍ່ສ້າງຕົວເມືອງແຂວງຢູນນານຈຳກັດ.
- 2017 ເຖິງ ປະຈຸບັນ, ປະທານບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈຳກັດ.
- 2017 ເຖິງ ປະຈຸບັນ, ປະທານ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ບູລະພາ ສັນຕິຖິງຄາ
ສັນຊາດ:	ຈີນ
ວັນເກີດ:	06/02 1967
ສະຖານທີ່ເກີດ:	ແຂວງເສຊວນ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2005 ເຖິງ ປະຈຸບັນ, ປະທານກິຕິມະສັກສະພາການຄ້າຈີນ ປະຈຳລາວ
- 2008 ເຖິງ ປະຈຸບັນ, ປະທານບໍລິສັດລີສັດ ກຣຸບ ຈຳກັດ
- 2009 ເຖິງ ປະຈຸບັນ, ສະມາຊິກສະພາບໍລິການສະມາຄົມຊາວຈີນຕ່າງດ້າວແຫ່ງຊາດຈີນປະຈຳລາວ
- 2010 ເຖິງ ປະຈຸບັນ, ຮອງປະທານສະມາຄົມຈີນວຽງຈັນລາວ
- 2011 ເຖິງ ປະຈຸບັນ, ຮອງປະທານບໍລິສັດ ລົງທຶນສາກົນແຄມຊີລາວຈຳກັດ
- 2015 ເຖິງ ປະຈຸບັນ, ປະທານສະພາການຄ້າຊາວຈີນຕ່າງດ້າວປະຈຳ ສປປ ລາວ

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ອູ່ ຊິງຫວາ (Mr. Wu Xinghua)
ສັນຊາດ:	ຈີນ
ວັນເກີດ:	09/01/1984
ສະຖານທີ່ເກີດ:	ແຂວງອ່ານຮຸຍ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສຳຊັ່ນ(Assumption Thai), ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2013 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນ ບໍລິສັດ ລີງທຶນສາກົນແຄມຊີລາວ ຈຳກັດ.
- 2014 ເຖິງ ປະຈຸບັນ, ຮອງອຳນວຍການບໍລິສັດ ກຣີດຕະພິງກຣຸບ ຈຳກັດ.
- 2014 ເຖິງ ປະຈຸບັນ, ຮອງອຳນວຍການ ບໍລິສັດ ລີງທຶນສາກົນເອວີຊີລາວ ຈຳກັດ.
- 2014-2019, ຜູ້ຕ່າງໜ້າຂາຮຸ້ນບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.
- 2015 ເຖິງ ປະຈຸບັນ, ຜູ້ຕ່າງໜ້າຂາຮຸ້ນໂຮງແຮມ ດອນຈັນພາເລດ.
- 2019 ເຖິງ ປະຈຸບັນ, ຮອງອຳນວຍການປະຈຳການ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ.

ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ:	ທ່ານ ເຊິ່ນ ເຟີຍຫູ້ (Mr. Sun Feihu)
ສັນຊາດ:	ຈີນ
ວັນເກີດ:	17/03/1986
ສະຖານທີ່ເກີດ:	ແຂວງເຫີເປີ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລການເງິນ ຢຸນນານ ຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 2010-2012, ວິຊາການບັນຊີບໍລິສັດຮັບເໝົາກໍ່ສ້າງ ຢຸນນານຈຳກັດ.
- 2012-2016, ຫົວໜ້າພະແນກການເງິນ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນ ເ ໜືອ ຈຳກັດ.
- 2012 ເຖິງ ປະຈຸບັນ, ຫົວໜ້າພະແນກການເງິນບໍລິສັດ ລົງທຶນຕ່າງປະເທດ ແຂວງຢຸນນານຈຳກັດ.
- 2016 ເຖິງ ປະຈຸບັນ, ອຳນວຍການຝ່າຍການເງິນ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນ ຕອນເໜືອ ຈຳກັດ.

ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະ



ຊື່ ແລະ ນາມສະກຸນ:	ທ່ານ ນາງ ເຕີ້ງ ຢູ່ (Ms. Deng Yu)
ສັນຊາດ:	ຈີນ
ວັນເກີດ:	20/05/1969
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເຊຍເໝີນ ແຂວງຝູຈ້ຽນ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:

- ເດືອນ 7/1991 – 6/1992 ເປັນພະນັກງານທະນາຄານກໍ່ສ້າງ ສປຈີນ ສາຂາປາວຊານແຂວງຢຸນນານ;
- ເດືອນ 6/1992 – 6/2002 ເປັນພະນັກງານ/ຮອງຫົວໜ້າພະແນກ/ຮອງອຳນວຍການຂອງທະນາຄານກໍ່ສ້າງ ສປ ຈີນ ສາຂາແຂວງຢຸນນານ ;
- ເດືອນ 10/2012 – 12/2007 ເຮັດວຽກຢູ່ທະນາຄານທຸລະກິດຄຸນໝິງ ຕັ້ງແຕ່ 2/2013 ຮັບຕຳແໜ່ງອຳນວຍການ ຂອງພະແນກທຸລະກິດ;
- ເດືອນ 12/2007– ປະຈຸບັນ ເຮັດວຽກຢູ່ທະນາຄານຟູ້ຕ່ຽນ ແຂວງຢຸນນານ ໃນນັ້ນ ຕັ້ງແຕ່ປີ 3-12/2013 ຮັບຕຳແໜ່ງອຳນວຍການ ຂອງພະແນກທຸລະກິດ, ເດືອນ 12/2008-11/2010 ຮັບຕຳແໜ່ງອຳນວຍການ ຂອງພະແນກໂຄງສ້າງ, ເດືອນ 11/2010 - 9/2011 ຮັບຕຳແໜ່ງອຳນວຍການ ຂອງພະແນກບໍລິຫານ, ເດືອນ 9/2011-10/2012 ຮັບຕຳແໜ່ງວິຊາການຂອງຄະນະກຳມະການການພັດທະນາດ້ານຍຸດທະສາດຂອງສະພາບໍລິຫານ ອຳນວຍການຂອງພະແນກການພັດທະນາດ້ານຍຸດທະສາດ, ເດືອນ 10/2012– 01/2014 ຮັບຕຳ ແໜ່ງຫົວໜ້າຫ້ອງການຜູ້ຕາງໜ້າປະເທດລາວ;
- ປີ 01/2014– ປະຈຸບັນ ຜູ້ອຳນວຍການໃຫຍ່ຂອງທະນາຄານລາວ ຈີນ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະ



ຊື່ ແລະ ນາມສະກຸນ:	ທ່ານ ສ່ຽວ ໂຢງ (Mr. Xiao Yong)
ສັນຊາດ:	ຈີນ
ວັນເກີດ:	02/07/1977
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:

  - ປີ 1999 – ປະຈຸບັນ ບໍລິສັດທີ່ປຶກສາບັນຊີຢ້ຳທ້າຍ
  - ປີ 2010– ປະຈຸບັນ ເປັນສະມາຊິກຄະນະກຳມະການຜູ້ຊ່ຽວຊານ ຂອງຄະນະຕ່າງໆຂອງຫ້ອງການການເງິນ ແຂວງຢຸນນານ ເຊັ່ນ ຄະນະກຳມະການກວດສອບກອງທຶນເພື່ອຊີ້ນຳຂະແໜງການຕ່າງໆ ແລະ ຄະນະກຳມະການ ການຊຳລະສະສາງ ແລະ ການປັບປຸງຂອງຕະຫຼາດຫລັກຊັບ
  - ປີ 2011– ປະຈຸບັນ ເປັນຜູ້ຊ່ຽວຊານພາຍນອກ ຂອງຄະນະກຳມະການກວດສອບ ຂອງຄະນະກຳມະການຄຸ້ມຄອງສັບສິນແຫ່ງລັດ ແຂວງຢຸນນານ
  - ປີ 2012– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ຂາຍຮຸ້ນ ສີເກົ ເຊີນ ເຈີ້ນ ສປຈີນ
  - ປີ 2013– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ຂາຍຮຸ້ນ ເຫວີຍສີ ຢຸນນານກົ່ງໂຖວ
  - ປີ 2013– ປະຈຸບັນ ເປັນວິຊາການກວດສອບດ້ານການບໍລິຫານການເງິນ ແລະ ທີ່ປຶກສາ ບໍລິສັດທີ່ໄດ້ເຂົ້າຕະຫຼາດຫລັກຊັບຈີນ ເຊັ່ນບໍລິສັດໄອເອີຟາ ເປ້ຍປາວເຊີງວູ້ ແລະ ທຽນສີງຈ້ຽນ
  - ປີ 2017 –ປະຈຸບັນ ເປັນຜູ້ອຳນວຍການບໍລິສັດທີ່ປຶກສາການຄຸ້ມຄອງບໍລິຫານ ຊີງຫົວ ລີ້ຊິ້ນ ປັກກິ່ງ
  - ປີ 2017 –ປະຈຸບັນ ເປັນຜູ້ ອຳນວຍການບໍລິສັດທີ່ປຶກສາບັນຊີ ຈົ່ງເສີ້ນຈົ້ງຫວນ ລາວ

ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະ



ຊື່ ແລະ ນາມສະກຸນ:	ທ່ານ ຈໍຊົ່ງ ບົວສີເມັ່ງມາ
ສັນຊາດ:	ລາວ
ວັນເກີດ:	15/12/1972
ສະຖານທີ່ເກີດ:	ແຂວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.
- 07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.
- 02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການພາຍທະນາຄານອຸດສາຫະກຳ ແລະ ການຄ້າ ຈີນ ສາຂາ ນະຄອນຫຼວງວຽງຈັນ.
- 04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງ ວຽງຈັນ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະ



ຊື່ ແລະ ນາມສະກຸນ:	ທ່ານ ວຽງສະຫວັນ ພັນທະລີ
ສັນຊາດ:	ລາວ
ວັນເກີດ:	25/01/1976
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

- ປະສົບການເຮັດວຽກ:

- 09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.
- 12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.
- 11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers.

ເອກະສານຄັດຕິດ 6



ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະ(ສະໄໝທີ 1)

ຊື່ ແລະ ນາມສະກຸນ:	ທ່ານ ວຽງສະຫວັນ ພັນທະລີ
ສັນຊາດ:	ລາວ
ວັນເກີດ:	25/01/1976
ສະຖານທີ່ເກີດ:	ນະຄອນຫຼວງວຽງຈັນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາ, ສາຂາກົດໝາຍວ່າດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

- ປະສົບການເຮັດວຽກ:

- 09/2000 - 11/2009 ທະນາຍຄວາມ ຂອງ DFDL Lao Legal & Tax Adviser.
- 12/2009 ເຖິງ ປະຈຸບັນ, ຜູ້ອຳນວຍການໃຫຍ່ບໍລິສັດ ພັນທະລີ ກົດໝາຍ ຈຳກັດ.
- 11/2016 ເຖິງ ປະຈຸບັນ, ຄູ່ຮ່ວມງານຢູ່ລາວ ຂອງ one Asia lawyers

ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະ(ສະໄໝທີ 1)



ຊື່ ແລະ ນາມສະກຸນ:	ທ່ານ ຈໍຊິ່ງ ບົວສີເນັ່ງມາ
ສັນຊາດ:	ລາວ
ວັນເກີດ:	15/12/1972
ສະຖານທີ່ເກີດ:	ແຂວງວຽງຈັນ


- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

- ປະສົບການເຮັດວຽກ:

- 09/1998 - 09/2004 ຫົວໜ້າໜ່ວຍງານທຸລະກິດກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ໂລຫະມີຄ່າ.
- 07/2007 - 01/2012, ຮອງຫົວໜ້າກົມຮ່ວມມືສາກົນທະນາຄານກາງແຫ່ງ ສປປ ລາວ.
- 02/2012 - 04/2015, ຫົວໜ້າພະແນກຄຸ້ມຄອງການປະຕິບັດການ ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງວຽງຈັນ.
- 04/2015 ເຖິງ ປະຈຸບັນ, ຮອງອຳນວຍການທະນາຄານອຸດສາຫະກຳ ແລະ ການຄ້າຈີນ ສາຂາ ນະຄອນຫຼວງ ວຽງຈັນ.

ຊີວະປະຫວັດຫຍໍ້ຂອງສະມາຊິກອິດສະ(ສະໄໝທີ 1)



ຊື່ ແລະ ນາມສະກຸນ:	ທ່ານ ນາງ ເຕີ້ງ ຢູ່ (Ms. Deng Yu)
ສັນຊາດ:	ຈີນ
ວັນເກີດ:	20/05/1969
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເຊຍເໝີນ ແຂວງຝູຈ້ຽນ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:

- ເດືອນ 7/1991 – 6/1992 ເປັນພະນັກງານທະນາຄານກໍ່ສ້າງ ສປຈີນ ສາຂາປາວຊານແຂວງຢຸນນານ;
- ເດືອນ 6/1992 – 6/2002 ເປັນພະນັກງານ/ຮອງຫົວໜ້າພະແນກ/ຮອງອຳນວຍການຂອງທະນາຄານກໍ່ສ້າງ ສປ ຈີນ ສາຂາແຂວງຢຸນນານ ;
- ເດືອນ 10/2012 – 12/2007 ເຮັດວຽກຢູ່ທະນາຄານທຸລະກິດຄຸນໝິງ ຕັ້ງແຕ່ 2/2013 ຮັບຕຳແໜ່ງອຳນວຍການ ຂອງພະແນກທຸລະກິດ;
- ເດືອນ 12/2007– ປະຈຸບັນ ເຮັດວຽກຢູ່ທະນາຄານຟູ້ຕ່ຽນ ແຂວງຢຸນນານ ໃນນັ້ນ ຕັ້ງແຕ່ປີ 3-12/2013 ຮັບຕຳແໜ່ງອຳນວຍການ ຂອງພະແນກທຸລະກິດ, ເດືອນ 12/2008-11/2010 ຮັບຕຳແໜ່ງອຳນວຍການ ຂອງພະແນກໂຄງສ້າງ, ເດືອນ 11/2010 - 9/2011 ຮັບຕຳແໜ່ງອຳນວຍການ ຂອງພະແນກບໍລິຫານ, ເດືອນ 9/2011-10/2012 ຮັບຕຳແໜ່ງວິຊາການຂອງຄະນະກຳມະການການພັດທະນາດ້ານຍຸດເທະສາດຂອງສະພາບໍລິຫານ ອຳນວຍການຂອງພະແນກການພັດທະນາດ້ານຍຸດທະສາດ, ເດືອນ 10/2012– 01/2014 ຮັບຕຳ ແໜ່ງຫົວໜ້າຫ້ອງການຜູ້ຕາງໜ້າປະເທດລາວ;
- ປີ 01/2014– ປະຈຸບັນ ຜູ້ອຳນວຍການໃຫຍ່ຂອງທະນາຄານລາວ ຈີນ.

ຊີວະປະຫວັດຫຍໍ້ຂອງສະມາຊິກອົດສະ(ສະໄໝທີ 1)



ຊື່ ແລະ ນາມສະກຸນ:	ທ່ານ ສ່ຽວ ໂຢງ (Mr. Xiao Yong)
ສັນຊາດ:	ຈີນ
ວັນເກີດ:	02/07/1977
ສະຖານທີ່ເກີດ:	ແຂວງຢຸນນານ ສປ ຈີນ

- ປະຫວັດການສຶກສາ:

ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ້ງ ສປຈີນ, ສາຂາການເງິນ.

- ປະສົບການເຮັດວຽກ:

- ປີ 1999 – ປະຈຸບັນ ບໍລິສັດທີ່ປຶກສາບັນຊີຢ້າຫ້າຍ
- ປີ 2010– ປະຈຸບັນ ເປັນສະມາຊິກຄະນະກຳມະການຜູ້ຊ່ຽວຊານ ຂອງຄະນະຕ່າງໆຂອງຫ້ອງການການເງິນ ແຂວງຢຸນນານ ເຊັ່ນ ຄະນະກຳມະການກວດສອບກອງທຶນເພື່ອຊີ້ນຳຂະແໜງການຕ່າງໆ ແລະ ຄະນະກຳມະການ ການຊຳລະສະສາງ ແລະ ການປັບປຸງຂອງຕະຫຼາດຫລັກຊັບ
- ປີ 2011– ປະຈຸບັນ ເປັນຜູ້ຊ່ຽວຊານພາຍນອກ ຂອງຄະນະກຳມະການກວດສອບ ຂອງຄະນະກຳມະການຄຸ້ມຄອງສັບສິນແຫ່ງລັດ ແຂວງຢຸນນານ
- ປີ 2012– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ຂາຍຮຸ້ນ ສີເກົ ເຊີນ ເຈີ້ນ ສປຈີນ
- ປີ 2013– ປະຈຸບັນ ສະມາຊິກຄະນະກຳມະການການລົງທຶນຂອງກອງທຶນການລົງທຶນການຊື້ຂາຍຮຸ້ນ ເຫວີຍສີ ຢຸນນານກົ່ງໂຖວ
- ປີ 2013– ປະຈຸບັນ ເປັນວິຊາການກວດສອບບັນຊີ ດ້ານການບໍລິຫານການເງິນ ແລະ ທີ່ປຶກສາ ບໍລິສັດທີ່ໄດ້ເຂົ້າຕະຫຼາດຫລັກຊັບຈີນ ເຊັ່ນບໍລິສັດໄອເອີຟາ ເປີ້ຍປາວເຊີງວູ້ ແລະ ທຽນສີງຈ້ຽນ
- ປີ 2017 – ປະຈຸບັນ ເປັນຜູ້ອຳນວຍການບໍລິສັດທີ່ປຶກສາການຄຸ້ມຄອງບໍລິຫານ ຊີງຫົວ ລີ້ຊິ້ນ ປັກກິ່ງ
- ປີ 2017 –ປະຈຸບັນ ເປັນຜູ້ ອຳນວຍການບໍລິສັດທີ່ປຶກສາບັນຊີ ຈົ່ງເສີ້ນຈົ້ງຫວ໋ນ ລາວ

ເອກະສານຄັດຕິດ 7

ໃບມອບສິດ

ຂຽນທີ .....

ວັນທີ ..... ເດືອນ ..... ປີ .....

(1) ຂ້າພະເຈົ້າ ທ້າວ/ນາງ ..... ສັນຊາດ : .....

ວັນທີເດືອນປີເກີດ ..... ບັດປະຈຳຕົວ / ເລກທີໜັງສືຜ່ານແດນເລກທີ: .....,

ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ .....

ປະເທດ .....;

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນ, ເຊິ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບສິດໃຫ້

☐ (1)ທ້າວ/ນາງ ..... ອາຍຸ ..... ປີ,

ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ ..... ເຮືອນເລກທີ ..... ບ້ານ .....

ເມືອງ ..... ແຂວງ ..... ປະເທດ .....; ຫຼື

☐ (2) ທ່ານ ວຽງສະຫວັນ ພັນທະລີ ອາຍຸ 44 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ A1-0010349

ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ ..... ; ຫຼື

☐ (3) ທ່ານ ຈໍຊິ ບົວສີເນ່ັງມາ ອາຍຸ 48 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ 01-18 005815

ເຮືອນເລກທີ ..... ບ້ານ ..... ເມືອງ ..... ແຂວງ ..... ປະເທດ ..... ; ຫຼື

☐ (4) ທ່ານ ນາງ ເຕີ້ງ ຢູ່ ອາຍຸ 51 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ E41274346 ເຮືອນເລກທີ

ບ້ານ ..... ເມືອງ ..... ແຂວງ ..... ປະເທດ ..... ; ຫຼື

☐ (5) ທ່ານ ສ່ຽວ ໂຢງ ອາຍຸ 43 ປີ, ບັດປະຈຳຕົວ ຫຼື ໜັງສືຜ່ານແດນເລກທີ G28936820 ເຮືອນເລກທີ

ບ້ານ ..... ເມືອງ ..... ແຂວງ ..... ປະເທດ ..... ; ຫຼື

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ບໍລິສັດ ວຽງ

ຈັນເຊັນເຕີ ລາວ ມະຫາຊົນ ປະຈຳປີ 2019 ໃນວັນທີ 29 ພຶດສະພາ 2020 ເວລາ 14:30 ໂມງ ທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ , ເວລາ ແລະ ສະຖານທີ່ອື່ນອີກດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງໃນກອງປະຊຸມ ດັ່ງລຸ່ມນີ້:

- ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

  ☐ ອະນຸມັດ ☐ ບໍ່ອະນຸມັດ

- ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ບາງວາລະ;

  ☐ ອະນຸມັດ ☐ ບໍ່ອະນຸມັດ

- ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້):

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2019;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 3: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງບໍລິສັດປະຈຳປີ 2019;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2019 ແລະ ແຜນການດຳເນີນທຸລະກິດປີ 2020;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການຈ່າຍເງິນປັນຜົນປະຈຳປີ 2019 ຂອງບໍລິສັດໃຫ້ຜູ້ຖືຮຸ້ນ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 6: ພິຈາລະນາ ແລະ ຮັບຮອງການຄັດເລືອກສະມາຊິກ ແລະ ປະທານສະພາບໍລິຫານສະໄໝທີ 2;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 7: ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງ ວຈຊຕ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 8: ພິຈາລະນາ ແລະ ອະນຸມັດແຜນການຮັບຊື້ພື້ນທີ່ຫ້ອງການທີ່ເປັນລາຍການທີ່ກ່ຽວພັນ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 9: ພິຈາລະນາ ແລະ ອະນຸມັດການປ່ຽນແທນຊັບສິນຄ້ຳປະກັນ ແລະ ການຕໍ່ອາຍຸການສັນຍາເງິນກູ້;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 10: ພິຈາລະນາ ແລະ ອະນຸມັດການສືບຕໍ່ວ່າຈ້າງບໍລິສັດ ເອີນແອນຢັ ລາວ ຈຳກັດເປັນບໍລິສັດກວດສອບບັນຊີ ໃຫ້ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 11: ພິຈາລະນາ ແລະ ອະນຸມັດການຄັດເລືອກສະມາຊິກຂອງຄະນະອຳນວຍການ ແລະ ຄະນະກຳມະການຕ່າງໆ ຂອງບໍລິສັດ;

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 12: ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີຂ້າພະເຈົ້າບໍ່ໄດ້ລະບຸຄວາມປະສົງໃນການລົງຄະແນນສຽງໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມພິຈາລະນາ ຫຼື ລົງມະຕິໃນເລື່ອງໃດນອກເໜືອຈາກເລື່ອງທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພີ່ມເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

(7) ການກະທຳໃດທີ່ຜູ້ຮັບມອບສິດໄດ້ກະທຳໄປໃນການປະຊຸມນັ້ນ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າໄດ້ລະບຸໄວ້ໃນໃບມອບສິດສະບັບນີ້ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກປະການ.

ລົງລາຍເຊັນຜູ້ມອບສິດ:.....

(.....)

ລົງລາຍເຊັນຜູ້ຮັບມອບສິດ:.....

(.....)

ໝາຍເຫດ:

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້;
2. ໜັງສືມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບສິດ ແລະ ຜູ້ຕາງໜ້າໃນທາງກົດໝາຍ ຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009. ຢ່າງໃດກໍຕາມ, ໃນກໍລະນີທີ່ໜັງສືມອບສິດສະບັບນີ້ຫາກບໍ່ໄດ້ຈົດທະບຽນສານ ແລະ ໄດ້ຍື່ນຕໍ່ບໍລິສັດ, ບໍລິສັດຈະບໍ່ຮັບຜິດຊອບໃດໆໃນຄວາມຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ມອບສິດ ແລະ ຜູ້ຮັບມອບສິດ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2019

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ບໍລິສັດ ວຽງຈັນ ເຊັນເຕີ ລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມ ເອກະສານຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ. ຢ່າງໃດກໍ່ຕາມ, ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະ ເພາະຜູ້ທີ່ມີ ເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.

<u>ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການເຂົ້າຮ່ວມກອງປະຊຸມ</u>

1. ກໍລະນີຜູ້ຖືຮຸ້ນເປັນບຸກຄົນທຳມະດາ

1.1 ຜູ້ຖືຮຸ້ນທີ່ເຂົ້າປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຖືຮຸ້ນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນ ຄົນຕ່າງປະເທດ);

1.2 ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີ ການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງ ລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳ ເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ;
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊິ່ງປາກົດພາບຖ່າຍ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນ ຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

2. ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ

2.1 ກໍລະນີຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້:

- ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.

2.2 ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າ (ຜູ້ທີ່ບໍ່ແມ່ນອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ) ເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມນີ້ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນພ້ອມປະທັບກາບໍລິສັດ ໂດຍໃຫ້ຂຽນຊື່ແຈ້ງຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການທີ່ເປັນນິຕິບຸກຄົນເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ.
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນ

ກໍລະນີເປັນຄົນຕ່າງປະເທດ) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການດັ່ງກ່າວ.

- ເອກະສານທີ່ທາງລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຕາງໜ້າແລະ ຍັງບໍ່ໝົດກຳນົດເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີເປັນຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

<u>ໝາຍເຫດ:</u> ໃນກໍລະນີທີ່ຜູ້ຖືຮຸ້ນເປັນບຸກຄົນຕ່າງປະເທດໃຫ້ປະຕິບັດຕາມຂໍ້ 1 ຫຼື ຂໍ້ 2 ແລ້ວແຕ່ກໍລະນີເຊິ່ງຫາກເອກະສານດັ່ງກ່າວເປັນພາສາອື່ນ ນອກເໜືອຈາກພາສາລາວ ຫຼື ພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ໂດຍໃຫ້ບຸກຄົນທຳມະດາ ຫຼື ອຳນວຍການທີ່ມີອຳນາດລົງລາຍເຊັນຜູກພັນນິຕິບຸກຄົນນັ້ນລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວດ້ວຍ.

<u>ການມອບໝາຍ</u>

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງ ໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບພັນທະໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.
2. ນຳສົ່ງໜັງສືມອບສິດຄືນ ທີ່ຫ້ອງການ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ເບີໂທ: (+856) 21 228299 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 28 ພຶດສະພາ 2019 ຫຼື ນຳສົ່ງໜ້າສະຖານທີ່ຈັດງານກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນ ໜ້ອຍກ່ວາຈຳນວນທີ່ຕົນຖືຢູ່ໄດ້.

<u>ການລົງທະບຽນ</u>

ບໍລິສັດເປີດຮັບລົງທະບຽນຕັ້ງແຕ່ເວລາ 13:00 ໂມງທີ່ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສ ປປ ລາວ.

1. ກໍລະນີມາດ້ວຍຕົນເອງ

1.1 ໃຫ້ຕິດຕໍ່ຈຸດລົງທະບຽນ ພ້ອມສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;

1.2 ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ.

2. ກໍລະນີມອບສິດໃຫ້ບຸກຄົນອື່ນ

2.1 ໃຫ້ຕິດຕໍ່ຈຸດກວດເອກະສານ ພ້ອມທັງສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ;

2.2 ຕິດຕໍ່ຈຸດລົງທະບຽນ ພ້ອມຢື່ນເອກະສານຕາມຂໍ້ 2.1 ຂ້າງຕົ້ນ ເຊິ່ງໄດ້ຜ່ານການກວດສອບແລ້ວ;

2.3 ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມອາລະ (ສະເພາະກໍລະນີຜູ້ມອບສິດບໍ່ໄດ້ອອກສຽງລົງຄະແນນໄວ້ໃນໜັງສືມອບສິດ).

<u>ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ</u>

1. ການລົງຄະແນນສຽງ:

1.1 ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.

1.2 ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

- ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກ່ວາຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
- ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສິດໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

1.3 ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ:

2.1 ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມທີ່ອາກາສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ເຂົ້າມາຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

2.2 ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

ເອກະສານຄັດຕິດ 9

ແຜນທີ່ສະຖານທີ່ຈັດ

ກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2019

ຫ້ອງ Diamond ໂຮງແຮມແລນມາກ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

